*Journal of Science and Teacher Education (JLSTE), 1*(2), 266-277

# ການນຳໃຊ້ຮູບແບບການສອນ PBL ເຂົ້າໃນການພັດທະນາການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນສຳລັບນັກສຶກສາຄູປະຖົມ ລະບົບ 12+2 ປີທີ 1 ວິທະຍາໄລຄູປາກເຊ

*ສົມສະໄຫວ ປະເສີດໄຊ**

*ພາກວິຊາ ສ້າງຄູປະຖົມ ວິທະຍາໄລຄູປາກເຊ*

**ບົດຄັດຫຍໍ້**

ການສຶກສາຄົ້ນຄ້ວາຄັ້ງນີ້ ມີຈຸດປະສົງ 1) ເພື່ອຊອກຫາປະສິດທິຜົນຄວາມກ້າວໜ້າຂອງນັກສຶກສາຄູໃນວິຊາພາສາອັງກິດເລື່ອງທັກສະການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນທີ່ຈັດການຮຽນຮູ້ແບບໃຊ້ບັນຫາເປັນຖານ (PBL) ແລະ 2) ເພື່ອສຶກສາຄວາມເພິ່ງພໍໃຈຂອງນັກສຶກສາທີ່ມີຕໍ່ການຮຽນ-ການສອນວິຊາພາສາອັງກິດເລື່ອງທັກສະການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນທີ່ຈັດການຮຽນຮູບແບບໃຊ້ບັນຫາເປັນຖານ (PBL) ກຸ່ມທົດລອງທີ່ໃຊ້ໃນການຄົ້ນຄ້ວາຄັ້ງນີ້ໄດ້ແກ່ ນັກສຶກສາຄູປະຖົມ ລະບົບ 12+2 ປີທີ 1 ວິທະຍາໄລຄູປາກເຊ ສົກຮຽນ 2021-2022 ຈຳນວນ 32 ຄົນ. ເຄື່ອງມືທີ່ໃຊ້ໃນການຄົ້ນຄ້ວາມີ 2 ຊະນິດຄື: 1) ແບບທົດສອບ ວັດຜົນສຳເລັດກ່ອນການຮຽນ ແລະ ຫຼັງການຮຽນວິຊາພາສາອັງກິດ ຈຳນວນ 30 ຂໍ້ 2) ແບບສອບຖາມຄວາມເພິ່ງພໍໃຈຂອງນັກສຶກສາທີ່ມີຕໍ່ການຮຽນ-ການສອນຕາມຮູບແບບ (PBL) ຈຳນວນ 29 ຂໍ້ ເຊິ່ງເປັນແບບສອບຖາມຊະນິດຕາມມາດຕາສ່ວນປະເມີນຄ່າ (Rating Scale) 5 ລະດັບ. ການວິເຄາະຂໍ້ມູນແມ່ນນຳໃຊ້ໂປເກຣມ Excel ເພື່ອຄຳນວນຫາປະສິດທິຜົນການຮຽນຮູ້ຂອງນັກສຶກສາ (E.I) ແລະ ຄວາມເພິ່ງພໍໃຈ ຂອງນັກສຶກສາ ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນໄດ້ແກ່ ເປີເຊັນ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ທົດສອບດ້ວຍຄ່າທີ (Independent simple T-test). ຜົນການວິໄຈພົບວ່າ: ຜົນການວິເຄາະປະສິດທິຜົນຄວາມກ້າວໜ້າທາງດ້ານການພັດທະນາການຮຽນຮູ້ ຂອງນັກສຶກສາ (E.I) ໂດຍນຳໃຊ້ວິທີສອນແບບ (PBL) ເຂົ້າໃນການຈັດການຮຽນ-ການສອນວິຊາພາສາອັງກິດກ່ຽວກັບທັກສະການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນສຳລັບນັກສຶກສາຄູປະຖົມ ລະບົບ 12+2 ປີທີ 1 ວິທະຍາໄລຄູປາກເຊ ມີຄ່າສະເລ່ຍເທົ່າກັບ 0.5575 ສະແດງວ່າ: ນັກສຶກສາມີຄວາມຮູ້ເພີ່ມຂຶ້ນ 0.5575 ຫຼື ຄິດໄລ່ເປັນສ່ວນຮ້ອຍເທົ່າກັບ 55.75%. ເຊິ່ງມີຄະແນນຫຼັງການຮຽນ ( $\overline{X}$= 23.44, SD = 1.31) ສູງກວ່າກ່ອນການຮຽນ ( $\overline{X}$= 17.53, SD = 2.18) ດ້ວຍລຳດັບຄວາມສຳຄັນທາງສະຖິຕິ ($t(32) = 19.31$, $p < 0.05$) ຄວາມເພິ່ງພໍໃຈຂອງນັກສຶກສາທີ່ມີຕໍ່ການຮຽນການສອນວິຊາພາສາອັງກິດທັກສະການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນ ໂດຍນຳໃຊ້ຮູບແບບການສອນແບບ (PBL) ໂດຍລວມແມ່ນມີມີຄວາມເພິ່ງພໍໃຈຫຼາຍ ມີຄ່າສະເລ່ຍເທົ່າກັບ $\overline{X}$ = 4.31.

***ຄຳສັບສຳຄັນ:*** *ພັດທະນາການຂຽນພາສາອັງກິດ, ຮູບແບບການສອນ ( PBL ), ຫຼັກໄວຍະກອນຂຽນພາສາອັງກິດ.*

**ຕິດຕໍ່ພົວພັນ : ສົມສະໄຫວ ປະເສີດໄຊ; ເບີໂທ: 020 29824965; ອີເມວ: somsavayphasuethxay@gmail.com*

# Using the PBL Teaching Model to Develop Grammatically Correct English Writing among First-Year Elementary Teacher Students in the 12+2 Program at Pakse Teacher Training College

*Somsavay PHASUETHXAY**

*Faculty of Primary Teacher, Pakse Teacher Training College*

## Abstract

The purposes of this research were to determine the effectiveness of student teachers' progress in English writing skills, focusing on grammatical accuracy, through the implementation of problem-based learning (PBL); and to examine students' satisfaction with English language teaching and learning, particularly in developing grammar-based writing skills using the PBL approach. The experimental group consisted of 32 first-year students in the 12+2 primary teacher education program at Pakse Teacher Training College during the 2021–2022 academic year. Two types of research instruments were used: a test to measure achievement before and after learning English writing with grammatical accuracy through the PBL approach, consisting of 30 multiple-choice items with four options each; and a questionnaire on student satisfaction with PBL (29 items). Data analysis was conducted using Microsoft Excel to calculate both students' learning effectiveness and their satisfaction. The statistical methods employed included frequency, mean, standard deviation, and an independent sample t-test. The findings revealed that the effectiveness index (E.I) of students' learning development through the PBL teaching method in improving grammatical accuracy in English writing was 0.5575, indicating that students' knowledge increased by 55.75%. The post-test score (X = 23.44, S.D = 1.31) was significantly higher than the pre-test score (X = 17.53, S.D = 2.18), with a statistically significant difference ($t(32) = 19.31$, $p < 0.05$).

**Keywords:** *Develop English writing, Teaching PBL style, English writing grammar.*

## 1. ພາກສະເໜີ

### *1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ພາສາອັງກິດມີຄວາມສຳຄັນຕໍ່ການພັດທະນາ ແລະ ການສຶກສາຢ່າຫຼວງຫຼາຍເນື່ອງຈາກວ່າເປັນພາສາສາກົນທີ່ໃຊ້ໃນການຕິດຕໍ່ສື່ສານລະຫວ່າງປະເທດຕ່າງໆໃນໂລກ, ການຮຽນຮູ້ພາສາອັງກິດຈະຊ່ວຍໃຫ້ເຂົ້າເຖິງແຫຼ່ງຂໍ້ມູນຄວາມຮູ້ ແລະ ໂອກາດທາງການສຶກສາ ແລະ ການເຮັດວຽກທີ່ຫຼາກຫຼາຍ, ສະນັ້ນ ພາສາອັງກິດຈຶ່ງມີຄວາມສຳຄັນ ແລະ ຄວາມຈຳເປັນທີ່ຈະຕ້ອງໄດ້ພັດທະນາຄຸນນະພາບການຮຽນການສອນພາສາອັງກິດເພື່ອໃຫ້ຄົນຮຸ່ນໃໝ່ມີຄວາມສາມາດໃນການໃຊ້ພາສາອັງກິດໃນລະດັບມາດຕາຖານໄດ້ ຕະຫຼອດຈົນສາມາດເລືອກເຟັ້ນ ແລະ ໃຊ້ປະໂຫຍດຈາກຂໍ້ມູນຂ່າວສານໄດ້ຢ່າງມີປະສິດທິພາບຈຶ່ງໄດ້ມີການພັດທະນາຫຼັກສູດທີ່ເນັ້ນໃຫ້ຜູ້ຮຽນມີຄວາມສາມາດທາງພາສາທີ່ສຳຄັນສອງດ້ານຄວບຄູ່ກັນໄປຄືຄວາມສາມາດໃນການໃຊ້ພາສາເພື່ອເຂົ້າສູ່ສັງຄົມ ແລະ ນະວັດຕະກຳ, ຄວາມສາມາດໃນການໃຊ້ພາສາຢ່າງຖືກຕ້ອງຕາມຫຼັກໄວຍະກອນ ແລະ ເໝາະສົມກັບສະຖານະການທີ່ໃຊ້. ມະຫາວິທະຍາໄລຊຽງໃໝ່ (2010) ເນັ້ນວ່າ ການຂຽນເປັນທັກສະສຳຄັນໃນການໃຊ້ພາສາອັງກິດ ແຕ່ຈະສື່ສານໄດ້ດີນັ້ນຜູ້ຂຽນຕ້ອງມີຄວາມສາມາດໃນການຂຽນ ຄືໃຊ້ພາສາໄດ້ຢ່າງຖືກຕ້ອງ ຊັດເຈນ ສາມາດເຮັດໃຫ້ຜູ້ອື່ນເຂົ້າໃຈຄວາມໝາຍທີ່ຕົນຂຽນໄດ້ ຈຶ່ງຕ້ອງມີການຝຶກຂຽນເລື້ອຍໆ ເພື່ອໃຫ້ເກີດຄວາມຊຳນານ ແລະ ຕ້ອງອາໃສການອ່ານມາເປັນແນວທາງໃນການຂຽນການຂຽນພາສາອັງກິດເປັນທັກສະທີ່ສຳຄັນທັກສະໜຶ່ງທີ່ຜູ້ຮຽນຕ້ອງຮຽນຮູ້ ເພາະບາງຄັ້ງການສື່ສານກັບບຸກຄົນອື່ນນັ້ນແມ່ນບໍ່ສາມາດສົນທະນາໂຕ້ຕອບໂດຍຕົງໄດ້ ຕ້ອງໄດ້ອາໃສການຂຽນຂໍ້ຄວາມເນື້ອເລື່ອງເພື່ອໃຊ້ໃນການສື່ສານ ມີການຂຽນຈົດໝາຍເລົ່າເລື່ອງ ຫຼື ແລກປ່ຽນຂໍ້ມູນ ແລະ ການຕື່ມແບບຟອມເອກະສານຕ່າງໆ ນອກຈາກນີ້ການຂຽນຍັງຊ່ວຍໃຫ້ຜູ້ຮຽນຝຶກນຳໂຄງສ້າງທາງພາສາ ຕະຫຼອດຄຳສັບທີ່ຄູໄດ້ສອນໄປແລ້ວມໃຊ້ຂຽນເປັນເລື່ອງຕາມຈຸດປະສົງທີ່ຕັ້ງໄວ້ເຮັດໃຫ້ຜູ້ຮຽນໄດ້ມີໂອກາດຝຶກການໃຊ້ພາສາໃຫ້ເກີດທັກສະພັດທະນາການໃນການໃຊ້ການຂຽນຫຼາຍຍິ່ງຂຶ້ນ (ທິບອະໄລ ໂກວິດ, 2540)

ຂະບວນຈັດການຮຽນການສອນແບບໃຊ້ບັນຫາເປັນຖານຂະບວນການຮຽນຮູ້ຂອງນັກສຶກສາໃນສັງຄົມຍຸກໃໝ່ມີກົນໄກການຮຽນຮູ້ໃໝ່ໆເກີດຂຶ້ນຢ່າງຕໍ່ເນື່ອງຕະຫຼອດເວລາ ຖ້າຮູບແບບການຈັດການຮຽນການສອນຂອງຄູອາຈານໃນປັດຈຸບັນຍັງບໍ່ໄດ້ຮັບການພັດທະນາທັ້ງໃນຮູບແບບການນຳສະເໜີເນື້ອໃນວິຊາການ ແລະ ເຕັກນິກວິທີການສອນໃໝ່ໆກໍເປັນເລື່ອງທີ່ໜ້າເປັນຫ່ວງ ເພາະອາດຈະສົ່ງຜົນໃຫ້ເກີດຊ່ອງວ່າງໃນການຮຽນຮູ້ລະຫວ່າງນັກສຶກສາກັບຄູອາຈານຜູ້ຮັບຜິດຊອບໃນຂະບວນການຖ່າຍທອດຄວາມຮູ້ຈົນຍາກທີ່ຈະຫາແນວທາງແກ້ໄຂໄດ້ (ກຽງສັກພອຍແສງ, 2010). ການຮຽນຮູ້ໂດຍໃຊ້ບັນຫາ ເປັນຖານ (Problem-based Learning) ຄືການຮຽນຮູ້ວິທີໜຶ່ງທີ່ມີຮູບແບບການຮຽນຮູ້ໂດຍໃຊ້ບັນຫາມາເປັນຕົວກະຕຸ້ນໃຫ້ຜູ້ຮຽນເກີດການຮຽນຮູ້ໂດຍໃຊ້ບັນຫາເປັນຖານ (Problem-based Learning ຫຼື PBL) ເປັນຮູບແບບການຮຽນຮູ້ທີ່ເກີດຂຶ້ນຈາກແນວຄິດທິດສະດີການຮຽນຮູ້ແບບສັງຄົມນິຍົມ (constructivism) ໂດຍໃຫ້ຜູ້ຮຽນສ້າງຄວາມ

ຮູ້ໃໝ່ ຈາກການໃຊ້ບັນຫາທີ່ເກີດຂຶ້ນຈິງໃນໂລກເປັນສະພາບການຂອງການຮຽນຮູ້ (Learning context) ເພື່ອໃຫ້ຜູ້ຮຽນເກີດທັກສະໃນການວິເຄາະ ແລະ ຄິດແກ້ໄຂບັນຫາ ລວມທັງໄດ້ຄວາມຮູ້ຕາມສາຂາວິຊາທີ່ຕົນສຶກສາໄປພ້ອມໆກັນ ການຮຽນຮູ້ໂດຍໃຊ້ບັນຫາ ເປັນຖານຈຶ່ງເປັນຜົນມາຈາກຂະບວນການເຮັດວຽກທີ່ຕ້ອງອາໃສຄວາມເຂົ້າໃຈ ແລະ ການແກ້ໄຂບັນຫາເປັນຫຼັກ ຖ້າເບິ່ງໃນແງ່ຂອງຍຸດທະສາດ ການສອນ PBL ເປັນເຕັກນິກການສອນທີ່ສົ່ງເສີມໃຫ້ຜູ້ຮຽນໄດ້ລົງມືປະຕິບັດດ້ວຍຕົນເອງ ປະເຊີນໜ້າກັບບັນຫາດ້ວຍຕົນເອງ ຈະເຮັດໃຫ້ຜູ້ຮຽນໄດ້ຝຶກທັກສະໃນການຄິດຫຼາຍຮູບແບບ ເຊັ່ນ ການຄິດວິຈານ ຄິດວິເຄາະ ການຄິດສັງເຄາະ ການຄິດສ້າງສັນອື່ນໆ ຫຼາຍໆທ່ານອາດຈະມີຄວາມສົງໄສວ່າການຮຽນຮູ້ໂດຍໃຊ້ບັນຫາເປັນຖານ (PBL ແລະ ການຮຽນຮູ້ເພື່ອແກ້ໄຂບັນຫາ ການຮຽນຮູ້ໂດຍໃຊ້ບັນຫາເປັນຖານ (Problem solving Learning) ຕ່າງກັນແນວໃດ ຄວາມແຕກຕ່າງທີ່ຊັດເຈນຄື: ການຮຽນຮູ້ໂດຍໃຊ້ບັນຫາເປັນຖານຈະເນັ້ນໜັກການກຳນົດສິ່ງທີ່ຈະຮຽນຮູ້ ແລະ ຂະບວນການຄົ້ນຄ້ວາຫາຄວາມຮູ້ໃໝ່ເພື່ອອະທິບາຍບັນຫາທີ່ພົບ ສ່ວນການຮຽນຮູ້ເພື່ອແກ້ໄຂບັນຫາຈະເນັ້ນການປະຍຸກໃຊ້ຄວາມຮູ້ທີ່ມີຢູ່ ແລະ ຕັດສິນໃຈທາງເລືອກທີ່ ເໝາະສົມສຳລັບການແກ້ໄຂບັນຫານັ້ນໆ ຈະເຫັນວ່າການຮຽນຮູ້ທັງສອງແບບບໍ່ແມ່ນເປັນສິ່ງດຽວກັນ ແຕ່ຈະມີຄວາມສຳພັນກັນ ແລະ ເປັນຂະບວນການທີ່ຕໍ່ເນື່ອງກັນ (Hmelo-Silver, 2004). Problem-based Learning ຫຼື PBL ເຊິ່ງເປັນວິທີການຮຽນຮູ້ທີ່ເນັ້ນໃຫ້ຜູ້ຮຽນແກ້ໄຂບັນຫາຈາກສະຖານະການຕົວຈິງເພື່ອພັດທະນາທັກສະຕ່າງໆ, ການວິເຄາະ, ການເຮັດວຽກຮ່ວມກັບຜູ້ອື່ນ ແລະ ການສື່ສານ. PBL ເປັນຂະບວນການຮຽນຮູ້ທີ່ຜູ້ຮຽນເປັນສູນກາງໂດຍຈະຮຽນຮູ້ຈາກປະສົບການຕົວຈິງໃນການແກ້ໄຂບັນຫາ ແລະຄວາມຮູ້ທີ່ໄດ້ປະຍຸກໃຊ້ໃນສະຖານະການຕ່າງໆຢ່າງມີປະສິດທິພາບ.

ດັ່ງນັ້ນ, ຂ້າພະເຈົ້າຜູ້ຄົ້ນວ້າໃນນາມທີ່ເປັນຄູສອນວິຊາພາສາອັງກິດ ເຫັນໄດ້ວ່າ: ການໃຊ້ບັນຫາເປັນຖານ PBL ເຂົ້າໃນຂະບວນການຈັດການຮຽນການສອນທັກສະການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍາກອນ ຈະຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ຈາກສິ່ງທີ່ຮູ້ມາແລ້ວມີຄວາມຮູ້ເພີ່ມຂຶ້ນ ດັ່ງນັ້ນ, ຈຶ່ງເລືອກເອົາ ການໃຊ້ບັນຫາເປັນຖານ PBL ເຂົ້າໃນການສອນທັກສະການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍາກອນໃຫ້ແກ່ນັກສຶກສາ ສາຍຄູປະຖົມ ລະບົບ 12+2 ວິທະຍາໄລຄູປາກເຊ ສົກຮຽນ 2022.

*1.2 ຄຳຖາມຂອງການຄົ້ນຄ້ວາ*

ການນຳໃຊ້ຮູບແບບການສອນ PBL ເຂົ້າໃນການພັດທະນາການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນສຳລັບນັກສຶກສາຄູປະຖົມ ລະບົບ 12+2 ປີທີ 1 ຢູ່ທີ່ວິທະຍາໄລຄູປາກເຊ ມີຄຳຖາມດັ່ງນີ້:

1) ສຶກສາຜົນການຮຽນຂອງນັກສຶກສາຄູໂດຍການນຳໃຊ້ຮູບແບບການສອນ PBL ເຂົ້າໃນການພັດທະນາການຂຽນພາສາອັງກິດໃຫ້ຖືກຕອ້ງຕາມຫຼັກໄວຍະກອນ ກ່ອນ ແລະ ຫຼັງການຮຽນ?

2) ນັກສຶກສາຄູຈະມີຄວາມເພິ່ງພໍໃຈຕໍ່ການຈັດການຮຽນການສອນໂດຍການນຳໃຊ້ຮູບແບບການສອນ PBL ເຂົ້າໃນການພັດທະນາການຂຽນພາສາອັງກິດໃຫ້ຖືກຕອ້ງຕາມຫຼັກໄວຍະກອນໃນລະດັບໃດ?

*1.3. ຈຸດປະສົງຂອງການຄົ້ນຄ້ວາ*

ການນຳໃຊ້ຮູບແບບການສອນ PBL ເຂົ້າໃນການພັດທະນາການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນສຳລັບນັກສຶກສາຄູປະຖົມ ລະບົບ 12+2 ປີທີ 1 ຢູ່ທີ່ວິທະຍາໄລຄູປາກເຊ ມີຈຸດປະສົງເພື່ອ:

1) ເພື່ອຊອກຫາປະສິດທິຜົນຄວາມກ້າວໜ້າດ້ານການຮຽນຮູ້ຂອງນັກສຶກສາຄູຫຼັງຈາກການນຳໃຊ້ຮູບແບບການສອນ PBL ເຂົ້າໃນການພັດທະນາການຂຽນພາສາອັງກິດໃຫ້ຖືກຕອ້ງຕາມຫຼັກໄວຍະກອນ ສຳລັບນັກສຶກສາຄູປະຖົມ ລະບົບ 12+2 ປີທີ 1 ວິທະຍາໄລຄູປາກເຊ.

2) ເພື່ອສຶກສາຄວາມເພິ່ງພໍໃຈຕໍ່ການຈັດການຮຽນການສອນໂດຍການນຳໃຊ້ຮູບແບບການສອນ PBL ເຂົ້າໃນການພັດທະນາການຂຽນພາສາອັງກິດໃຫ້ຖືກຕອ້ງຕາມຫຼັກໄວຍະກອນສຳລັບນັກສຶກສາຄູປະຖົມ ລະບົບ 12+2 ປີທີ 1 ວິທະຍາໄລຄູປາກເຊ.

## 2. ບົດວິໄຈທີ່ກ່ຽວຂ້ອງ

ການນຳໃຊ້ຮູບແບບການສອນ PBL ເຂົ້າໃນການພັດທະນາການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນສຳລັບນັກສຶກສາຄູປະຖົມ ລະບົບ 12+2 ປີທີ 1 ຢູ່ທີ່ວິທະຍາໄລຄູປາກເຊ ຜູ້ສຶກສາໄດ້ສຶກສາງານວິໄຈທີ່ກ່ຽວຂ້ອງເພື່ອມານຳໃຊ້ເປັນແນວທາງໃນການສຶກສາດັ່ງນີ້:

ຊັດທະອະດີ ບຸນຖະໜອມ (2004) ມະຫາວິທະຍາໄລສວນດຸສິດ ກຸງເທບມະຫານະຄອນ ໄດ້ສຶກສາຄົ້ນຄວ້າ "ການຈັດການຮຽນຮູ້ໂດຍໃຊ້ບັນຫາເປັນຖານ" ເຊິ່ງສະຫຼຸບຜົນການຄົ້ນຄວ້າໄວ້ດັ່ງນີ້: ການຈັດການຮຽນຮູ້ໂດຍໃຊ້ບັນຫາເປັນຖານ (PBL) ແມ່ນວິທີການຮຽນຮູ້ວິທີໜຶ່ງທີ່ມີຮູບແບບການຮຽນຮູ້ໂດຍການນຳບັນຫາເປັນຕົວກະຕຸ້ນໃຫ້ຜູ້ຮຽນເກີດການຮຽນຮູ້ໂດຍໃຊ້ບັນຫາເປັນຖານ (PBL) ປະກອບດ້ວຍຂັ້ນຕອນຄື: 1) ຂັ້ນກຳນົດບັນຫາ 2) ຂັ້ນເຮັດຄວາມເຂົ້າໃຈ 3) ຂັ້ນດຳເນີນການສຶກສາຄົ້ນຄວ້າ 4) ຂັ້ນສັງເຄາະຄວາມຮູ້ 5) ຂັ້ນສະຫຼຸບ ແລະ ປະເມີນຄ່າ 6) ຂັ້ນນຳສະເໜີປະເມີນຜົນງານ ເປັນຮູບແບບການຮຽນທີ່ເກີດຂຶ້ນຈາກແນວຄິດຕາມທິດສະດີການຮຽນຮູ້ແບບສ້າງສັນນິຍົມ (Constructivism) ໂດຍໃຫ້ຜູ້ຮຽນສ້າງຄວາມຮູ້ໃໝ່ຈາກການໃຊ້ບັນຫາທີ່ເກີດຂຶ້ນຈິງໃນໂລກເປັນບໍລິບົດຂອງການຮຽນຮູ້ (Learning Context) ເພື່ອໃຫ້ຜູ້ຮຽນເກີດທັກສະການຄິດວິເຄາະ ແລະ ຄິດແກ້ໄຂບັນຫາລວມທັງໄດ້ຄວາມຮູ້ຕາມສາຂາວິຊາທີ່ຕົນໄດ້ສຶກສາໄປພ້ອມກັບຂະບວນການແກ້ໄຂບັນຫາ

ປະກອບດ້ວຍ 4 ຂັ້ນຕອນຄື: 1) ເຮັດຄວາມເຂົ້າໃຈບັນຫາ 2) ວາງແຜນແກ້ໄຂບັນຫາ 3) ດຳເນີນການແກ້ບັນຫາ 4) ກວດກາຄຳຕອບ.

Kok and Duman (2023) ໄດ້ຄົ້ນຄວ້າ "ຜົນຂອງການຮຽນຮູ້ທີ່ອີງໃສ່ບັນຫາເປັນຖານຕໍ່ກັບທັກສະຄວາມສາມາດແກ້ໄຂບັນຫາໃນການສອນພາສາອັງກິດ" (The effect of problem-based learning on problem-solving skills in English language teaching), ການຄົ້ນຄວ້າມີຈຸດປະສົງເພື່ອອະທິບາຍລຳດັບວິທີປະສົມປະສານສອງດ້ານ, ດ້ານທຳອິດມີຈຸດປະສົງເພື່ອພິດຈາລະນາຜົນກະທົບຂອງການຮຽນຮູ້ຕາມບັນຫາ PBL ຕໍ່ທັກສະການແກ້ໄຂບັນຫາ ແລະ ດ້ານທີສອງເພື່ອເປີດເຜີຍຄວາມຄິດເຫັນຂອງນັກຮຽນກ່ຽວກັບ PBL ການອອກແບບການທົດລອງກັບກຸ່ມຄວບຄຸມທີ່ມີການທົດສອບກ່ອນ ແລະ ຫຼັງໄດ້ຮັບການພິດຈາລະນາໃນມິຕິດ້ານປະລິມານໃນຂະນະທີ່ຢູ່ໃນມິຕິດ້ານຄຸນນະພາບການອອກແບບກໍລະນີສຶກສາແມ່ນຮັບຮອງເອົາກຸ່ມນັກສຶກສາຂະໜາດປະລິມານປະກອບດ້ວຍນັກສຶກສາ 46 ຄົນທີ່ຮຽນຢູ່ໂຮງຮຽນພາສາຕ່າງປະເທດຂອງມະຫາວິທະຍາໄລ ສາທາລະນະ ຕວກກີ, ນັກສຶກສາ 23 ຄົນເຂົ້າຮ່ວມການທົດລອງ ໃນຂະນະທີ່ 23 ຄົນຂອງພວກເຂົາຖືກລວມຢູ່ໃນກຸ່ມຄວບຄຸມ, ກຸ່ມການສຶກສາຂອງຂະໜາດຄຸນນະພາບແມ່ນນັກຮຽນ 8 ຄົນທີ່ຖືກຄັດເລືອກຈາກກຸ່ມທົດລອງໂດຍໃຊ້ແບບທົດສອບການແກ້ໄຂບັນຫາ (problem solving inventory: PSI) ເພື່ອລວບລວມຂໍ້ມູນດ້ານປະລິມານໃນຂະນະທີ່ແບບສຳພາດປາຍເປີດມາດຕະຖານຖືກນຳມາໃຊ້ເພື່ອເກັບກຳຂໍ້ມູນຄຸນນະພາບ, ຂໍ້ມູນປະລິມານໄດ້ຮັບການວິເຄາະໂດຍໃຊ້ໂປຣແກຣມ SPSS 22, ຂໍ້ມູນຄຸນນະພາບໄດ້ຮັບການວິເຄາະໂດຍການອະທິບາຍ, ພົນລະນາເມື່ອນຳເອົາ PBL ໄປໃຊ້ພົບວ່າ ທັກສະການແກ້ໄຂບັນຫາຂອງກຸ່ມທົດລອງເພີ່ມຂຶ້ນຢ່າງມີລະດັບຄວາມສຳຄັນເມື່ອປຽບທຽບກັບກຸ່ມຄວບຄຸມທີ່ບໍ່ໄດ້ໃຊ້ PBL ຂໍ້ມູນດ້ານຄຸນນະພາບຊີ້ໃຫ້ເຫັນວ່າ PBL ຊ່ວຍພັດທະນາທັກສະການແກ້ໄຂບັນຫາທັກສະທາງວິຊາການ, ທັກສະທາງສັງຄົມ, ທັກສະທາງພາສາ ເວລາໃນໄລຍະຍາວມີຜົນກະທົບເຮັດໃຫ້ແຮງຈູງໃຈຫຼຸດລົງ.

ສະຫລຸບລວມແລ້ວ, ອີງຕາມຜົນໄດ້ຮັບດ້ານປະລິມານຂອງການສຶກສານີ້, ວິທີການ PBL ໃນການສອນພາສາອັງກິດໄດ້ປັບປຸງທັກສະການແກ້ໄຂບັນຫາຂອງນັກຮຽນ. ຜົນໄດ້ຮັບຄຸນນະພາບສະແດງໃຫ້ເຫັນວ່າວິທີການ PBL ປະກອບສ່ວນເຂົ້າໃນການພັດທະນາທັກສະພາສາ, ທັກສະທາງວິຊາການ, ທັກສະທາງສັງຄົມ ແລະ ທັກສະການແກ້ໄຂບັນຫາ, ຈາກຜົນການວິໄຈສາມາດສະເໜີຄຳແນະນຳຕໍ່ໄປນີ້ໄດ້ ການໃຊ້ PBL ຊໍ້າຊ້ອນເປັນເວລາຍາວນານອາດຈະເຮັດໃຫ້ເກີດຄວາມເບື່ອໜ່າຍ ແລະ ຂາດແຮງຈູງໃຈ, ດັ່ງນັ້ນຄວາມສາມາດບັນລຸປະສິດທິພາບທີ່ສູງຂຶ້ນແມ່ນໄດ້ຈາກການໃຊ້ເວລາທີ່ເໝາະສົມ ແລະ ໃຊ້ PBL ປະສົມປະສານກັບວິທີການສອນທີ່ເນັ້ນໃຫ້ຜູ້ຮຽນເປັນໃຈກາງ ກຸ່ມການສຶກສາທີ່ແຕກຕ່າງກັນສາມາດກວດສອບຜົນກະທົບຂອງ PBL ຕໍ່ທັກສະການແກ້ໄຂບັນຫາ.

Dochy, Segers, Van den Bossche & Gijbels (2003) ໄດ້ສຶກສາຄົ້ນຄ້ວາຜົນກະທົບການຮຽນຮູ້ແບບໃຊ້ບັນຫາເປັນຖານວິເຄາະດ້ານປະລິມານ "Effective of Problem-Based-Learning: A meta-analysis" ເຊິ່ງທ່ານໄດ້ວິເຄາະດ້ານປະລິມານມີສອງຈຸດປະສົງຄື: 1) ເພື່ອບອກເຖິງຜົນກະທົບຕົ້ນຕໍຂອງການຮຽນຮູ້ຕາມບັນຫາທີ່ມີຕໍ່ຜົນໄດ້ຮັບສອງປະເພດ ເຊັ່ນ ຄວາມຮູ້ ແລະ ທັກສະ 2) ເພື່ອບອກເຖິງປັດໃຈທີ່ອາດຈະສົ່ງຜົນຕໍ່ການຮຽນຮູ້ຕາມບັນຫາໄດ້, ພວກເຮົາໄດ້ເລືອກ 43 ບົດຄວາມທີ່ມາດຕາຖານສຳລັບອັນລວມ ການສຶກສາທົດສະດີກ່ຽວກັບການຮຽນຮູ້ທີ່ອີງໃສ່ບັນຫາໃນການສຶກສາຊັ້ນສູງທີ່ດຳເນີນຢູ່ໃນຫ້ອງຮຽນຕົວຈິງ ການທົບທວນຄືນໄດ້ເປີດເຜີຍວ່າມີຜົນກະທົບທາງບວກທີ່ເຂັ້ມແຂງຈາກ PBL ກ່ຽວກັບທັກສະຂອງນັກຮຽນນີ້ແມ່ນສະແດງໃຫ້ເຫັນການນັບຄະແນນສຽງເຊັ່ນດຽວກັບຂະໜາດຜົນກະທົບລວມ, ນອກຈາກນີ້ຍັງບໍ່ມີການສຶກສາວິໄຈໃດລາຍງານຜົນກທົບທາງລົບເລີຍ, ເມື່ອພິຈາລະນາຜົນກະທົບຂອງ PBL ຕໍ່ຄວາມຮູ້ຂອງນັກຮຽນພົບວ່າມີແນວໂນ້ມທີ່ຈະສົ່ງຜົນທາງລົບ ຂະໜາດຂອງຜົນກະທົບລວມແມ່ນເປັນໄປທາງລົບຢ່າງມີລະດັບຄວາມສຳຄັນ ເຖິງຢ່າງໃດກໍ່ຕາມຜົນໄດ້ຮັບນີ້ແມ່ນໄດ້ຮັບອິດທິພົນຢ່າງຫຼວງຫຼາຍຈາກການສຶກສາວິໄຈສອງກໍລະນີ ແລະ ຈຳນວນຄະແນນສຽງບໍ່ເຖິງລະດັບທີ່ມີລະດັບຄວາມສຳຄັນສະຫຼຸບໄດ້ວ່າຂະໜາດຜົນກະທົບລວມ ສຳລັບຜົນກະທົບຕໍ່ຄວາມຮູ້ແມ່ນບໍ່ເຂັ້ມແຂງອາດເປັນໄປໄດ້ວ່າຕົວປັບຜົນກະທົບຂອງ PBL ປັດໃຈດ້ານວິຊາການ, ລະດັບຄວາມຊຳນິຊຳນານຂອງນັກຮຽນ, ໄລຍະເວລາເກັບຮັກສາ ແລະ ປະເພດວິທີການປະເມີນຜົນໄດ້ຖືກກວດສອບ, ການວິເຄາະກຸ່ມຄວບຄຸມນີ້ໄດ້ສະແດງໃຫ້ເຫັນວ່າສຳລັບຜົນໄດ້ຮັບທີ່ກ່ຽວຂ້ອງກັບຄວາມຮູ້ ແລະ ທັກສະລະດັບຄວາມຊຳນິຊຳນານຂອງນັກຮຽນມີຄວາມກ່ຽວຂ້ອງກັບການປ່ຽນແປງຂອງຂະໜາດຜົນກະທົບ ຢ່າງໃດກໍ່ຕາມຜົນໄດ້ຮັບສຳລັບທັກສະໃຫ້ຮູບພາບໃນທາງບວກທີ່ສອດຄ່ອງກັນ, ສຳລັບຜົນໄດ້ຮັບທີ່ກ່ຽວຂ້ອງກັບຄວາມຮູ້ຜົນໄດ້ຮັບຊີ້ໃຫ້ເຫັນວ່າຄວາມແຕກຕ່າງທີ່ພົບເຫັນໃນປີທຳອິດ ແລະ ປີທີສອງຫາຍໄປໃນພາຍຫຼັງ, ການຄົ້ນພົບທີ່ໂດດເດັ່ນສຸດທ້າຍທີ່ກ່ຽວຂ້ອງກັບໄລຍະເວລາທີ່ຮັກສາຄົງຢູ່ກັບນັກຮຽນໃນ PBL ໄດ້ຮັບຄວາມຮູ້ໜ້ອຍລົງເລັກນ້ອຍແຕ່ຈື່ຈຳຄວາມຮູ້ທີ່ໄດ້ມາຫຼາຍ.

ທະນັນຍາ ກຸນເຈລາ ແລະ ນິດທິດາ ອາຕິພັດທະຣະນັນ (2018) ໄດ້ຄົ້ນຄວ້າການນຳໃຊ້ການຮຽນຮູ້ແບບໂຄງການເພື່ອເສີມສ້າງທັກສະການອ່ານ, ການຂຽນ ແລະ ການຄິດວິເຄາະພາສາອັງກິດຂອງນັກຮຽນຊັ້ນມັດທະຍົມສຶກສາທີ 5(Using Project-Based Learning to Enhance English Reading, Writing, and Critical Thinking Skills Among Grade 11 Students)ຈຸດປະສົງຂອງການຄົ້ນຄວ້າຄັ້ງນີ້ ແມ່ນເພື່ອສົມທຽບທັກສະການອ່ານພາສາອັງກິດ ແລະ ທັກສະການຄິດວິເຄາະຂອງນັກຮຽນກ່ອນ ແລະ ຫຼັງການນຳໃຊ້ການຮຽນແບບໂຄງການ ແລະ ເພື່ອສຶກສາທັກສະການຂຽນພາສາອັງກິດຂອງນັກຮຽນພາຍຫຼັງນຳໃຊ້ການຮຽນແບບໂຄງການ.ກຸ່ມຕົວຢ່າງທີ່ນຳໃຊ້ເຂົ້າໃນການຄົ້ນຄວ້າຄັ້ງນີ້ແມ່ນນັກຮຽນ ມ.5/5 ຈຳນວນ 23 ຄົນ ໃນ

ໂຄງການວິທະຍາສາດ-ຄະນິດສາດ ຢູ່ທີ່ວິທະຍາໄລຄູ Prince Royal, ອຳເພີເມືອງ, ແຂວງ ຊຽງໃໝ່, ທີ່ໄດ້ເຂົ້າຮຽນໃນຫຼັກສູດການອ່ານ ແລະ ຂຽນພາສາອັງກິດ.ພາກຮຽນທີ 1 ຂອງສົກຮຽນ 2018 ແມ່ນໄດ້ມາຈາກການເກັບຕົວຢ່າງແບບສຸ່ມກຸ່ມ. ເຄື່ອງມືທີ່ໃຊ້ໃນການທົດລອງແມ່ນ 3 ແຜນການຮຽນຮູ້ຕາມໂຄງການ, 21 ໄລຍະ, ແລະອຸປະກອນທີ່ນຳໃຊ້ສຳລັບການເກັບກຳຂໍ້ມູນແມ່ນການທົດສອບທັກສະການອ່ານພາສາອັງກິດ.ການປະເມີນທັກສະການຂຽນພາສາອັງກິດ ແລະ ການທົດສອບທັກສະການຄິດວິເຄາະໄດ້ຖືກວິເຄາະໂດຍການຊອກຫາຄ່າສະເລ່ຍ, ຄວາມບ່ຽງເບນມາດຕະຖານ, ເປີເຊັນ ແລະ t-test. ຜົນການວິໄຈພົບວ່າ ທັກສະການອ່ານພາສາອັງກິດແລະ ທັກສະການຄິດວິເຄາະຂອງນັກຮຽນໄດ້ສູງຂຶ້ນຢ່າງຫຼວງຫຼາຍ ຫຼັງຈາກໄດ້ນຳໃຊ້ການຮຽນຮູ້ແບບໂຄງການ ໃນລະດັບຄວາມໝາຍທາງສະຖິຕິ .05 ລວມທັງທັກສະການຂຽນພາສາອັງກິດຂອງນັກຮຽນ.ຢູ່ໃນລະດັບທີ່ຜ່ານມາດຖານ 60 ເປີເຊັນ ແລະ ໄດ້ພັດທະນາເທື່ອລະກ້າວ ພາຍຫຼັງນຳໃຊ້ການຮຽນແບບໂຄງການ.

Yiying ZHANG (2015) ໄດ້ສຶກສາຄົ້ນຄ້ວາ "ການຮຽນຮູ້ຕາມໂຄງການໃນຫຼັກສູດການຟັງ ແລະ ການເວົ້າພາສາອັງກິດຂອງວິທະຍາໄລຈີນ ຈາກທິດສະດີສູ່ການປະຕິບັດ" (Project-Based Learning in Chinese College English Listening and Speaking Course: From Theory to Practice) ຫນຶ່ງໃນບັນຫາສຳຄັນທີ່ສຸດໃນການສອນ EFL ແມ່ນການທີ່ນັກຮຽນຂາດສະພາບແວດລ້ອມໃນການໃຊ້ພາສາອັງກິດທີ່ແທ້ຈິງ ບົດຄວາມນີ້ໄດ້ຄົ້ນຫາຄວາມຈຳເປັນ ແລະ ການປະຕິບັດຂອງການຮຽນຮູ້ໂຄງການ (PBL) ໃນຫ້ອງຮຽນຟັງ ແລະ ເວົ້າພາສາອັງກິດຂອງວິທະຍາໄລຈີນ. ຫຼັກສູດດັ່ງກ່າວລວມມີໂຄງການສ້າງ 10 ອາທິດເຊິ່ງປະກອບດ້ວຍຫ້າຂັ້ນຕອນ. ໃນຫຼັກສູດນີ້, ໃນຫຼັກສູດນີ້, ນັກສຶກສາໄດ້ມີໂອກາດຝຶກທັກສະພາສາອັງກິດໃນຂະນະທີ່ນຳໃຊ້ພາສາອັງກິດເພື່ອເຮັດການຄົ້ນຄວ້າ ແລະ ສຳເລັດວຽກງານທີ່ແທ້ຈິງ. ຜົນໄດ້ຮັບສະແດງໃຫ້ເຫັນວ່າ ແຮງຈູງໃຈ ແລະ ຄວາມເປັນເອກະລາດຂອງການຮຽນຮູ້ພາສາອັງກິດໄດ້ຮັບການປັບປຸງ ແລະ ຄວາມສາມາດໃນການນຳໃຊ້ຄວາມຮູ້ຂອງເຂົາເຈົ້າເພື່ອມາວິເຄາະ ແລະ ສັງເຄາະຂໍ້ມູນຂ່າວສານໄດ້ຮັບການປັບປຸງຢ່າງຫຼວງຫຼາຍ ດັ່ງນັ້ນ, PBL ເປັນທາງເລືອກທີ່ເໝາະສົມ ແລະ ປ່ຽນແປງໄດ້ຕໍ່ກັບການຮຽນ-ການສອນພາສາອັງກິດແບບດັ້ງເດີມ. ຢ່າງໃດກໍ່ຕາມ, ບັນຫາອາດຈະເກີດຂຶ້ນເຊັ່ນ: ການຄຸ້ມຄອງກຸ່ມ, ການມີສ່ວນຮ່ວມຂອງນັກຮຽນ, ການປະເມີນ ແລະ ເງື່ອນໄຂ, ແລະ ການແຈກຢາຍເວລາ, ເຊິ່ງຕ້ອງການການຄົ້ນຄວ້າຕື່ມອີກ.

Zhang, Shi & Zhang (2023) ໄດ້ສຶກສາຄົ້ນຄ້ວາກ່ຽວກັບ "ຄຸນນະພາບການຮ່ວມມືໃນການຮຽນຮູ້ໂຄງການໂດຍອີງໃສ່ຄວາມຮັບຮູ້ຂອງກຸ່ມ" (Research on the Quality of Collaboration in Project- Based Learning on group Awareness) ການຮຽນຮູ້ທີ່ອີງໃສ່ໂຄງການ (PBL) ແມ່ນຮູບແບບທີ່ສຳຄັນຂອງການຮຽນຮູ້ຮ່ວມກັນທີ່ມີຜົນກະທົບທາງບວກຢ່າງຫຼວງຫຼາຍຕໍ່ການພັດທະນາຄວາມສາມາດຂອງນັກຮຽນ. ຢ່າງໃດກໍ່ຕາມ, ຂໍ້ມູນທີ່ສ້າງຂຶ້ນໃນໄລຍະເວລາດົນນານຂອງ PBL ແມ່ນຍາກທີ່ຈະບັນທຶກໃນເວລາທີ່ແທ້ຈິງ ແລະ ມີຄວາມຂາດແຄນຂອງການຄົ້ນຄວ້າ ໂດຍອາໄສການສັງເກດ, ຄວາມຊັດເຈນ ແລະ ຈາກປະສົບການສະເພາະທາງກ່ຽວກັບຄວາມສຳພັນລະຫວ່າງຄຸນນະພາບຂອງການຮ່ວມມື ແລະ ປະສິດທິພາບຂອງການຮ່ວມມື. ໃນການສຶກສານີ້, ພວກເຮົາໃຊ້ການຂຸດຄົ້ນຂໍ້ຄວາມເພື່ອວັດແທກ ແລະ ວິເຄາະຂໍ້ມູນຂະບວນການຈາກຫຼັກສູດຟີຊິກໃນລະດັບວິທະຍາໄລທີ່ນຳໃຊ້ການຮຽນຮູ້ຮູບແບບໂຄງການຢູ່ໃນມະຫາວິທະຍາໄລ. ພາຍໃຕ້ທິດສະດີການປູກຈິດສຳນຶກຂອງກຸ່ມ, ພວກເຮົາກໍ່ສ້າງລະບົບການຮຽນຮູ້ທີ່ອີງໃສ່ໂຄງການ ແລະ ສະກັດຂໍ້ມູນການຮັບຮູ້ຫົກມິຕິລະດັບ (ລວມທັງຕົວເລກຂອງຂໍ້ຄວາມ, ສະຕິປັນຍາ, ຄວາມຮັບຮູ້ທາງດ້ານຈິດໃຈ, ຄວາມຮັບຮູ້ດ້ານພຶດຕິກຳ, ການຮັບຮູ້ທາງສັງຄົມຂອງສະມາຊິກໃນກຸ່ມ, ແລະ ຄວາມເຂົ້າໃຈຂອງຜູ້ນຳກຸ່ມຂອງໂຄງການ). ຫຼັງຈາກນັ້ນ, ຂໍ້ມູນເຫຼົ່ານີ້ຖືກນຳໃຊ້ເພື່ອສ້າງແບບຈຳລອງການຖົດຖອຍຫຼາຍ, ເຊິ່ງເຮັດໃຫ້ການວິເຄາະຄຸນນະພາບຂອງການຮ່ວມມືພາຍໃນກຸ່ມເຮັດວຽກຮ່ວມກັນໄດ້. ຜົນໄດ້ຮັບສະແດງໃຫ້ເຫັນວ່າຂໍ້ມູນການຮັບຮູ້ຂອງກຸ່ມທີ່ຖືກປຸງແຕ່ງໂດຍອັດຕະໂນມັດໂດຍການຂຸດຄົ້ນຂໍ້ຄວາມສາມາດສະທ້ອນເຖິງຄຸນນະພາບຂອງການຮ່ວມມື ແລະ ຄຸນນະພາບຂອງການຮ່ວມມືສາມາດກຳນົດປະມານ 50% ຂອງປະສິດທິຜົນຂອງການຮ່ວມມື. ປັດໃຈສຳຄັນທີ່ສົ່ງຜົນກະທົບຕໍ່ຄຸນນະພາບການຮ່ວມມືຂອງການຮຽນຮູ້ຈາກໂຄງການແມ່ນ ຄວາມເຂົ້າໃຈຂອງຜູ້ນຳກຸ່ມກ່ຽວກັບໂຄງການ ແລະ ຄວາມຮັບຮູ້ທາງດ້ານສະຕິປັນຍາຂອງສະມາຊິກໃນກຸ່ມ. ດັ່ງນັ້ນ, ເພື່ອປັບປຸງຄຸນນະພາບຂອງການຮ່ວມມືໃນ PBL, ຄູຄວນເລືອກເອົາຜູ້ນຳກຸ່ມທີ່ມີຄວາມຮັບຜິດຊອບ ແລະ ຊຸກຍູ້ການສື່ສານທີ່ມີຄວາມຫມາຍລະຫວ່າງສະມາຊິກໃນກຸ່ມ, ເພື່ອສົ່ງເສີມຊຸກຍູ້ການພັດທະນາການຮ່ວມມືທີ່ມີຄຸນນະພາບສູງ ແລະ ຍືນຍົງ

## 3. ວິທີດຳເນີນການຄົ້ນຄ້ວາ

ໃນການຄົ້ນຄວ້າຄັ້ງນີ້ ຜູ້ຄົ້ນຄວ້າແມ່ນເລືອກເອົານັກສຶກສາຄູປະຖົມ ລະບົບ 12+2 ປີທີ 1 ວິທະຍາໄລຄູປາກເຊ ມາເປັນປະຊາກອນ ແລະ ກຸ່ມຕົວຢ່າງໃນການດຳເນີນການຄົ້ນຄວ້າ ເພາະວ່ານັກສຶກສາດັ່ງກ່າວແມ່ນນອນໃນນັກສຶກສາທີ່ຜູ້ຄົ້ນຄວ້າໄດ້ສອນຕົວຈິງໃນລາຍວິຊາທີ່ນຳມາດຳເນີນການຄົ້ນຄວ້າໃນຄັ້ງນີ້.

*3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

ປະຊາກອນ ແລະ ກຸ່ມຕົວຢ່າງ ທີ່ໃຊ້ເຂົ້າໃນການວິໄຈຄັ້ງນີ້ແມ່ນນັກສຶກສາຄູສາຍຮຽນະຖົມ ລະບົບ 12+2 ປີທີ 1 ວິທະຍາໄລຄູປາກເຊ ເຊິ່ງມີຈຳນວນ 32 ຄົນ, ຍິງ 20 ຄົນໂດຍວິທີເລືອກແບບເຈາະຈົງ (Purposive Sampling)

*3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ແມ່ນ

1) ບົດສອນ: ວິຊາ ພາສາອັງກິດ ໃນການພັດທະນາທັກສະການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນ ໂດຍໃຊ້ຮູບແບບການສອນ BBL ສຳລັບນັກສຶກສາຄູປະຖົມ ລະບົບ 12+2

ປີທີ1 ຈຳນວນ 3 ບົດ, ໃຊ້ເວລາສອນບົດໜຶ່ງ 3 ຊົ່ວໂມງ, ລວມທັງໝົດ 9 ຊົ່ວໂມງ

2) ບົດທົດສອບ: ບົດທົດສອບກ່ອນ ແລະ ຫຼັງຮຽນ ວິຊາພາສາອັງກິດກ່ຽວກັບການພັດທະນາທັກສະການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນ ໂດຍໃຊ້ຮູບແບບການສອນ BBL, ໃນກິດຈະກຳໃນແຕ່ລະບົດເຊິ່ງຜູ້ຮຽນຈະໄດ້ດຳເນີນເຮັດເປັນກຸ່ມ, ແບບທົດສອບຍ່ອຍພາຍຫຼັງຮຽນຈົບໃນແຕ່ລະບົດ

3) ແບບສອບຖາມວັດຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການຮຽນ - ການສອນຕາມຮູບແບບ PBL ຈຳນວນ 30 ຂໍ້ ເຊິ່ງເປັນແບບສອບຖາມຊະນິດຕາມມາດຕາສ່ວນປະມານຄ່າ (Rating Scale) 5 ລະດັບໂດຍອີງຕາມເນື້ອໃນການດຳເນີນຂັ້ນຕອນຂອງການສອນແບບ PBL

3.3 *ວິທີການສ້າງເຄື່ອງມື*

*3.3.1 ການສ້າງບົດສອນ*

1) ສຶກສາທິດສະດີພື້ນຖານຂອງ PBL ແລະ ຂັ້ນຕອນການຈັດການຮຽນຮູ້ໂດຍທີ່ພັດທະນາໂດຍ (Barrows, 1996) ມີ 6 ຂັ້ນຕອນຫຼັກ ດັ່ງນີ້:

ຕາຕະລາງ 1: ຂັ້ນຕອນ PBL

| |
|---|
| 1. ການກຳນົດບັນຫາ (Defining the Problem)<br>ຂັ້ນຕອນທຳອິດແມ່ນໃຫ້ນັກຮຽນບອກເຖິງບັນຫາທີ່ໜ້າສົນໃຈທີ່ກ່ຽວຂ້ອງກັບເນື້ອໃນທີ່ຮຽນ |
| 2. ເຮັດຄວາມເຂົ້າໃຈບັນຫາ (Understanding the Problem)<br>ນັກຮຽນຈະໄດ້ຮຽນຮູ້ ແລະ ວິເຄາະບັນຫາຢ່າງລະອຽດເພື່ອເຮັດຄວາມເຂົ້າໃຈເຖິງທຳມະຊາດ ແລະ ອົງປະກອບຕ່າງໆຂອງບັນຫາ |
| 3. ສຶກສາຄົ້ນຄວ້າ (Investingating the Problem)<br>ນັກຮຽນຈະໄດ້ເຮັດການຄົ້ນຄ້ວາຂໍ້ມູນ ແລະ ຫຼັກຖານຕ່າງໆທີ່ກ່ຽວຂ້ອງຂອງບັນຫາເພື່ອສ້າງຄວາມເຂົ້າໃຈທີ່ເລິກເຊິ່ງຍິ່ງຂຶ້ນ |
| 4. ສັງເຄາະຄວາມຮູ້ (Synthesiszing Knowledge)<br>ນັກຮຽນຈະໄດ້ລວບລວມຂໍ້ມູນທີ່ໄດ້ຈາກການສຶກສາຄົ້ນຄວ້າ ແລະ ສັງເຄາະຄວາມຮູ້ເພື່ອສ້າງຄວາມເຂົ້າໃຈບັນຫາຢ່າງເປັນລະບົບ |
| 5. ສະຫຼຸບ ແລະ ປະເມີນຄຳຕອບ (Summarizing and Evaluation Soloutions)<br>ນັກຮຽນຈະໄດ້ສະຫຼຸບຜົນງານການສຶກສາຄົ້ນຄວ້າ, ສັງເຄາະຄວາມຮູ້ ແລະ ປະເມີນຄຳຕອບ ຫຼື ແນວທາງແກ້ໄຂບັນຫາທີ່ອາດຈະເປັນໄປໄດ້ |
| 6. ນຳສະເໜີປະເມີນຜົນງານ (Presenting and Evaluating the work)<br>ນັກຮຽນຈະໄດ້ນຳສະເໜີຜົນງານຂອງຕົນເອງ ແລະ ປະເມີນຜົນງານຂອງຕົນເອງ ແລະ ເພື່ອນຮ່ວມຫ້ອງ |

2) ສ້າງແຜນການສອນຕາມຂອບເຂດເນື້ອໃນຫຼັກສູດຂອງລາຍວິຊາ ພາສາອັງກິດ ເພື່ອພັດທະນາການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນສຳລັບນັກສຶກສາສາຍຄູປະຖົມລະບົບ 12+2 ປີທີ 1 ຕາມໂຄງສ້າງຫຼັກສູດທີ່ກຳນົດໄວ້ ດ້ານເນື້ອໃນ ແລະ ຈຸດປະສົງເພື່ອນຳມາສ້າງເປັນບົດສອນ

3) ສຶກສາຂັ້ນຕອນວິທີຂອງການສ້າງແຜນການສອນເຊິ່ງປະກອບດ້ວຍຈຸດປະສົງ, ເນື້ອໃນ, ກິດຈະກຳການຮຽນການສອນ, ແລະ ປະກອນທີ່ໃຊ້ເປັນແຫຼ່ງການຮຽນຮູ້, ກຳນົດຂັ້ນຕ່າງໆໃນການຮຽນຮູ້ ແລະ ກຳນົດເວລາທີ່ໃຊ້ໃນແຕ່ລະກິດຈະກຳໃຫ້ລະອຽດ

4) ໄດ້ສຶກສາເອກະສານທີ່ກ່ຽວຂ້ອງໃນການສ້າງບົດທົດສອບການພັດທະນາການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນເພື່ອໃຫ້ສອດຄ່ອງກັບແຜນການສອນທີ່ວາງໄວ້

5) ນຳສະເໜີບົດສອນ ຕໍ່ອາຈານທີ່ປຶກສາກວດສອບ ຈຸດປະສົງ, ເນື້ອໃນ, ກິດຈະກຳການຮຽນຮູ້, ສື່ການສອນ ແລະ ການວັດປະມົນຜົນ ຄວາມເໝາະສົມຂອງໄລຍະເວລາ ເພື່ອກວດຄວາມຖືກຕ້ອງແລ້ວແກ້ໄຂຕາມຄຳແນະນຳຂອງອາຈານຄູທີ່ປຶກສາ

6) ນຳບົດສອນທີ່ປັບປຸງແກ້ໄຂແລ້ວໄປໃຫ້ຜູ້ຊ່ຽວຊານຈຳນວນ 3 ທ່ານ ເພື່ອພິຈາລະນາຫາຄວາມສອດຄ່ອງຂອງແຜນການສອນເຊິ່ງປະກອບດ້ວຍ ຈຸດປະສົງ, ເນື້ອໃນ, ກິດຈະກຳການຮຽນຮູ້ ແລະ ການປະເມີນຜົນໂດຍໃຊ້ດັດສະນີຄວາມສອດຄ່ອງດັ່ງນີ້:

ໃຫ້ຄະແນນ +1 ແນ່ໃຈວ່າ ແຜນການສອນນັ້ນສອດຄ່ອງກັບເນື້ອໃນຕາມຈຸດປະສົງທີ່ກຳນົດ

ໃຫ້ຄະແນນ 0 ບໍ່ແນ່ໃຈວ່າ ແຜນການສອນນັ້ນສອດຄ່ອງກັບເນື້ອໃນຕາມຈຸດປະສົງທີ່ກຳນົດ

ໃຫ້ຄະແນນ -1 ແນ່ໃຈວ່າ ແຜນການສອນນັ້ນບໍ່ສອດຄ່ອງກັບເນື້ອໃນຕາມຈຸດປະສົງທີ່ກຳນົດ

ນຳເອົາຂໍ້ມູນທີ່ໄດ້ຈາກຜູ້ຊ່ຽວຊານມາຫາຄ່າດັດຊະນີຄວາມສອດຄ່ອງໂດຍໃຊ້ສູດດັ່ງລຸ່ມນີ້:

$$IOC = \frac{\sum R}{N}$$

$IOC$ ແທນດັດຊະນີຄວາມສອດຄ່ອງລະຫວ່າງຂໍ້ສອບກັບຈຸດປະສົງຂອງການຮຽນຮູ້

$\sum R$ ແທນຜົນລວມຂອງຄວາມຄິດເຫັນຂອງຜູ້ຊ່ຽວຊານທີ່ເຫັນວ່າສອດຄ່ອງກັນ

$N$ ແທນຈຳນວນຜູ້ຊ່ຽວຊານທັງໝົດ

ນຳຄ່າດັດຊະນີຄວາມສອດຄ່ອງທີ່ໄດມາຈາກຜູ້ຊ່ຽວຊານທັງ 3 ທ່ານໃຫ້ມາເຊິ່ງມີຄ່າ $IOC$ ແຕ່ 0.67 – 1.00 ເຊິ່ງທຽບໃສ່ເກນທີ່ໃຊ້ພິຈາລະນາດັດຊະນີຄວາມສອດຄ່ອງເຫັນວ່າ $\geq 0.50$ ສະແດງວ່າ ບົດສອນນັ້ນມີຄວາມເໝາະສົມ.

*3.3.2 ການສ້າງບົດທົດສອບ*

1) ໄດ້ດຳເນີນການສ້າງບົດທົດສອບ ແລະຫາຄຸນນະພາບຂອງບົດທົດສອບວັດຜົນການຮຽນຮູ້ດັ່ງນີ້:

(1) ສຶກສາຕຳລາ ແລະ ເອກະສານວິທີສ້າງບົດທົດສອບ ແລະ ຫາຄຸນນະພາບຂອງບົດທົດສອບວັດຜົນສຳເລັດທາງການຮຽນ

(2) ສຶກສາເນື້ອໃນຫຼັກສູດວິຊາ:ພາສາອັງກິດ ທັກສະການຂຽນ, ຈຸດປະສົງ, ເນື້ອໃນ, ກິດຈະກຳ ແລະ ການວັດປະເມີນຜົນ ໃນການນຳໃຊ້ກິດເກມ ແລະ ສຶກສາທິດສະດີການຮຽນຮູ້

ຂອງ Bloom ເພື່ອສ້າງບົດທົດສອບໃຫ້ສອດຄ່ອງກັບຈຸດປະສົງການຮຽນ ແລະ ເນື້ອໃນບົດຮຽນທີ່ສອນ.

(3) ສ້າງບົດທົດສອບໂດຍການອີງໃສ່ລະດັບຄວາມສຳຄັນທີ່ໄດ້ຈາກການວິເຄາະຫຼັກສູດ ຕາມພຶດຕິກຳ 6 ລະດັບທາງສະຕິປັນຍາຂອງ (Bloom's Taxonomy, 1956) ແລະ ນຳສະເໜີຕໍ່ອາຈານທີ່ປຶກສາ ເຊິ່ງມີຕາຕະລາງວິເຄາະຂໍ້ສອບດັ່ງຕໍ່ໄປນີ້: ການວິເຄາະຂໍ້ສອບ 6 ລະດັບຂອງ Bloom

ຕາຕະລາງ 2: ລະດັບຂອງ Bloom

| ເນື້ອໃນ | ພຶດຕິກຳ | | | | |
|---|---|---|---|---|---|
| | ຄວາມຮູ້, ຄວາມຈຳ | ຄວາມເຂົ້າໃຈ | ການນຳໄປໃຊ້ | ການວິເຄາະ | ການສັງເຄາະ |
| | | | | | |

(4) ນຳບົດທົດສອບໄປໃຫ້ອາຈານທີ່ປຶກສາວິທະຍານິພົນກວດສອບຄວາມຖືກຕ້ອງຂອງຄຳຖາມແຕ່ລະຂໍ້ ກັບຈຸດປະສົງດ້ານພຶດຕິກຳ ເພື່ອກວດຄວາມຖືກຕ້ອງ ແລ້ວແກ້ໄຂຕາມຄຳແນະນຳຂອງອາຈານທີ່ປຶກສາ

(5) ນຳບົດທົດສອບໃຫ້ຜູ້ຊ່ຽວຊານ ຈຳນວນ 3 ທ່ານທີ່ມີຄວາມຊ່ຽວຊານໃນການສ້າງແບບທົດສອບເພື່ອພິຈາລະນາຫາຄວາມສອດຄ່ອງລະຫວ່າງຂໍ້ຄຳຖາມກັບຈຸດປະສົງຂອງການຮຽນຮູ້ ໂດຍໃຊ້ສູດ IOC (ສົມນຶກ ພັດທິຍະທານີ, 2546) ໂດຍກາ (✓) ລົງໃສ່ໃນຊ່ອງ +1,0 ຫຼື - 1 ທີ່ກົງກັບຄວາມຄິດເຫັນຂອງທ່ານ

+ 1 ໝາຍເຖິງ ອົງປະກອບຂອງແບບສອບຖາມສອດຄ່ອງ

0 ໝາຍເຖິງ ບໍ່ແນ່ໃຈວ່າ ອົງປະກອບຂອງແບບສອບຖາມສອດຄ່ອງ

– 1 ໝາຍເຖິງ ອົງປະກອບຂອງແບບສອບຖາມບໍ່ສອດຄ່ອງ

ນຳຜົນການປະເມີນຂອງຜູ້ຊ່ຽວຊານແຕ່ລະຂໍ້ມາຫາຄ່າດັດຊະນີຄວາມສອດຄ່ອງ IOC ໂດຍໃຊ້ສູດດັ່ງນີ້:

$$IOC = \frac{\sum R}{N}$$

$IOC$ ແທນດັດຊະນີຄວາມສອດຄ່ອງລະຫວ່າງຂໍ້ສອບກັບຈຸດປະສົງຂອງການຮຽນຮູ້

$\sum R$ ແທນຜົນລວມຂອງຄວາມຄິດເຫັນຂອງຜູ້ຊ່ຽວຊານທີ່ເຫັນວ່າສອດຄ່ອງກັນ

$N$ ແທນຈຳນວນຜູ້ຊ່ຽວຊານທັງໝົດ

ເກນເລືອກໃຊ້ຄຳຖາມ

- ຄຳຖາມທີ່ມີຄ່າ IOC ຕັ້ງແຕ່ 0.5-1.00 ແມ່ນຄັດເລືອກໄວ້ໃຊ້
- ຄຳຖາມທີ່ມີຄ່າ IOC ຕ່ຳກວ່າ 0.5 ຄວນພິຈາລະນາປັບປຸງ ຫຼື ຕັດອອກ

(1) ນຳເອົາຄະແນນຄວາມຄິດເຫັນຂອງຜູ້ຊ່ຽວຊານມາວິເຄາະເພື່ອຫາຄ່າດັດຊະນີຄວາມສອດຄ່ອງ ແລ້ວເລືອກເອົາບົດທົດສອບທີ່ມີຄ່າດັດຊະນີ ຄ່າສະເລ່ຍຕັ້ງແຕ່ 0.5 – 1.00 ສະແດງວ່າ: ແບບທົດສອບນັ້ນມີຄວາມເໝາະສົມ

(2) ເລືອກເອົາຂໍ້ທີ່ມີຄ່າດັດຊະນີຄວາມສອດຄ່ອງຕັ້ງແຕ່ 0.5 ຂຶ້ນໄປມາສ້າງເປັນແບບທົດສອບ ຫຼັງຈາກນັ້ນນຳໄປທົດສອບກັບນັກສຶກສາສາຍຄູປະຖົມລະບົບ 12+2 ເຊິ່ງບໍ່ແມ່ນກຸ່ມທົດລອງເພື່ອນຳເອົາຜົນການທົດສອບມາຫາຄວາມຍາກງ່າຍ ແລະ ຄ່າອຳນາດຈຳແນກ ໂດຍມີສູດຫາຄ່າອຳນາດຈຳແນກ (r) ແລະ ລະດັບຄວາມຍາກງ່າຍ (P)

(3) ພິຈາລະນາຄັດເລືອກຂໍ້ສອບ ໂດຍຄັດເລືອກຂໍ້ສອບທີ່ມີຄວາມຍາກງ່າຍຕັ້ງແຕ່ 0.20 – 0.80 ແລະ ຄ່າອຳນາດຈຳແນກຕັ້ງແຕ່ 0.20 – 1.00 ເພື່ອນຳມາທົດສອບກັບນັກສຶກສາສາຍຄູປະຖົມລະບົບ 12+2 ປີທີ 2 ເຊິ່ງບໍ່ແມ່ນກຸ່ມຕົວຢ່າງ. ( ທີ່ໄດ້ຜ່ານການຮຽນຫົວຂໍ້ດັ່ງກ່າວມາແລ້ວ)

(4) ນຳເອົາຂໍ້ສອບທີ່ຜ່ານການຄັດໄລ່ ເຊິ່ງມີຄ່າຄວາມຍາກງ່າຍ (P) ມີຄ່າແຕ່ 0.20 - 0.40 ແລະ ຄ່າອຳນາດຈຳແນກ (r) ແຕ່ 0.22 - 0.80 ເຫັນວ່າຢູ່ໃນເກນທີ່ໃຊ້ໄດ້ ແລະ ສາມາດທີ່ຈະນຳໄປໃຊ້ໃນກຸ່ມທົດລອງ

*3.3.3 ການສ້າງ ແລະ ຫາຄຸນນະພາບແບບວັດຄວາມເພິ່ງພໍໃຈຂອງນັກສຶກສາ*

(1) ສຶກສາທິດສະດີ, ເອກະສານ, ບົດຄົ້ນຄວ້າກ່ຽວກັບວິທີການສ້າງແບບທົດສອບຄວາມເພິ່ງພໍໃຈຈາກເອກະສານ, ຕຳລາຕ່າງໆ

(2) ສຶກສາເນື້ອໃນຂະບວນການຈັດກິດຈະກຳການຮຽນການສອນວິຊາພາສາອັງກິດ ການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນ ຕາມຮູບແບບການຈັດການຮຽນຮູ້ໂດຍໃຊ້ບັນຫາເປັນຖານ.

(3) ສ້າງແບບວັດຄວາມເພິ່ງພໍໃຈກ່ຽວກັບຂະບວນຈັດການຮຽນຮູ້ໂດຍໃຊ້ບັນຫາເປັນຖານ (PBL) ລັກສະນະແບບສອບຖາມເປັນແບບມາດຕາສ່ວນປະມານຄ່າ (Rating Scale) 5 ລະດັບໂດຍການກຳນົດເກນໃຫ້ຄະແນນຕາມລະດັບຄວາມຕ້ອງການດັ່ງນີ້:

- ຄະແນນ 5 ເພິ່ງພໍໃຈຫຼາຍທີ່ສຸດ
- ຄະແນນ 4 ເພິ່ງພໍໃຈຫຼາຍ
- ຄະແນນ 3 ເພິ່ງພໍໃຈປານກາງ
- ຄະແນນ 2 ເພິ່ງພໍໃຈໜ້ອຍ
- ຄະແນນ 1 ເພິ່ງພໍໃຈໜ້ອຍທີ່ສຸດ (ບຸນຊົມ ສີສະອາດ, 2554)

(4) ນຳເອົາແບບວັດຄວາມເພິ່ງພໍໃຈທີ່ສ້າງສຳເລັດແລ້ວສະເໜີອາຈານທີ່ປຶກສາ ເພື່ອພິຈາລະນາຄວາມຖືກຕ້ອງເໝາະສົມ ໃນດ້ານການໃຊ້ພາສາໃນການສື່ຄວາມໃຫ້ສອດຄ່ອງກັບຈຸດປະສົງແລ້ວນຳໄປປັບປຸງ

(5) ນຳແບບວັດຄວາມເພິ່ງພໍໃຈທີ່ປັບປຸງແລ້ວໄປສະເໜີຕໍ່ຜູ້ຊ່ຽວຊານ ຈຳນວນ 3 ທ່ານ ເພື່ອພິຈາລະນາຄວາມເໝາະສົມຂອງ

ຂໍ້ຄວາມ ແລະ ຄວາມທ່ຽງຕົງຂອງຂໍ້ຄໍາຖາມແຕ່ລະຂໍ້ ໂດຍກໍານົດຄະແນນຄວາມຄິດເຫັນຕໍ່ຂໍ້ຄໍາຖາມແຕ່ລະຂໍ້ດັ່ງນີ້:

+ 1 ໝາຍເຖິງ ແນ່ໃຈວ່າ ຂໍ້ຄໍາຖາມສອດຄ່ອງຕາມຈຸດປະສົງເນື້ອໃນທີ່ຕ້ອງການວັດ

0 ໝາຍເຖິງ ບໍ່ແນ່ໃຈວ່າ ຂໍ້ຄໍາຖາມສອດຄ່ອງຕາມຈຸດປະສົງເນື້ອໃນທີ່ຕ້ອງການວັດ

– 1 ໝາຍເຖິງ ແນ່ໃຈວ່າ ຂໍ້ຄໍາຖາມບໍ່ສອດຄ່ອງຕາມຈຸດປະສົງເນື້ອໃນທີ່ຕ້ອງການວັດ

(6) ນໍາເອົາຂໍ້ມູນທີ່ໄດ້ຈາກຜູ້ຊ່ຽວຊານມາຫາຄ່າດັດຊະນີຄວາມສອດຄ່ອງໂດຍໃຊ້ສູດດັ່ງນີ້:

$$IOC = \frac{\sum R}{N}$$

$IOC$ ແທນດັດຊະນີຄວາມສອດຄ່ອງ

$\sum R$ ແທນຜົນລວມຂອງຄວາມຄິດເຫັນຂອງຜູ້ຊ່ຽວຊານ

$N$ ແທນຈໍານວນຜູ້ຊ່ຽວຊານທັງໝົດ

ນໍາແບບວັດຄວາມເພິ່ງພໍໃຈມາປັບປຸງແກ້ໄຂຕາມຜູ້ຊ່ຽວຊານສະເໜີແນະ ນໍາໄປທົດລອງໃຊ້ກັບນັກສຶກສາທີ່ບໍ່ແມ່ນກຸ່ມທົດລອງ. ແທນຄ່າຄະແນນຄວາມຄິດເຫັນຂອງຜູ້ຊ່ຽວຊານໄປໃສ່ສູດເພື່ອຫາຄ່າດັດຊະນີຄວາມສອດຄ່ອງຜ່ານການຫາ IOC ເຫັນວ່າແບບສອບຖາມແຕ່ລະຂໍ້ມີຄ່າ IOC ເທົ່າກັບ 1.00 ແລະ ຄ່າຄວາມເຊື່ອໝັ້ນ $\alpha = 0.90$ ເຊິ່ງສາມາດນໍາເອົາແບບສອບຖາມທັງໝົດໄປໃຊ້ກັບກຸ່ມຈິງໄດ້

*3.3 ວິທີເກັບກໍາຂໍ້ມູນ*

ໃນການສຶກສາຄົ້ນຄ້ວາຄັ້ງນີ້ ຜູ້ສຶກສາໄດ້ດໍາເນີນການເກັບຮວບລວມຂໍ້ມູນຕາມຂັ້ນຕອນດັ່ງລຸ່ມນີ້:

<u>ຂັ້ນຕອນທີ 1</u>: ຂຽນໜັງສືສະເໜີຂໍອະນຸຍາດດໍາເນີນການຄົ້ນຄ້ວາວິໄຈຕໍ່ຜູ້ອໍານວຍການວິທະຍາໄລຄູປາກເຊ.

<u>ຂັ້ນຕອນທີ 2:</u> ນໍາເອົາໜັງສືສະເໜີໄປສະເໜີຕໍ່ພາກວິຊາສ້າງຄູປະຖົມເພື່ອຂໍລົງເກັບກໍາຂໍ້ມູນນັກສຶກສາດ້ວຍການສອນໃນຮູບແບບ PBL ແລະ ດ້ວຍແບບສອບຖາມຄວາມເພິ່ງພໍໃຈຂອງນັກສຶກສາຄູ

<u>ຂັ້ນຕອນທີ 3:</u> ຜູ້ສຶກສາໄດ້ນໍາເອົາບົດທົດສອບນັກສຶກສາກ່ອນການຮຽນດ້ວຍບົດທົດສອບລວມທີ່ໄດ້ກະກຽມໄວ້ ຈໍານວນ: 30 ຂໍ້ ຫຼັງຈາກນັ້ນໄດ້ຈັດການຮຽນ - ການສອນ ນໍາໃຊ້ຮູບແບບການສອນ PBL ທີ່ໄດ້ສ້າງຂຶ້ນຕາມແຜນການສອນວິຊາພາສາອັງກິດເຊິ່ງນັກສຶກສາຈະໄດ້ເຮັດບົດທົດສອບຫຼັງຈາກຮຽນຕາມຮູບແບບການສອນ PBL ໃນແຕ່ລະບົດຕໍ່ຈາກນັ້ນຜູ້ຄົ້ນຄ້ວາໄດ້ນໍາແບບປະເມີນຄວາມເພິ່ງພໍໃຈຂອງນັກສຶກສາທີ່ມີຕໍ່ການຈັດການຮຽນການສອນໂດຍໃຊ້ ຮູບແບບການສອນ PBL ໃນວິຊາ ພາສາອັງກິດໃຫ້ກຸ່ມຕົວຢ່າງປະເມີນຄວາມພໍໃຈທີ່ມີຕໍ່ການຈັດການຮຽນການສອນແບບ PBL.

<u>ຂັ້ນຕອນທີ 4:</u> ຜູ້ສຶກສາໄດ້ລວບລວມຜົນຄະແນນຈາກແບບທົດສອບກ່ອນ ແລະ ຫຼັງການຮຽນການສອນແບບ PBL ລວມທັງຜົນຄະແນນຈາກແບບສອບຖາມຄວາມເພິ່ງພໍໃຈຂອງນັກສຶກສາຄູເພື່ອນໍາມາວິເຄາະຂໍ້ມູນທາງສະຖິຕິໃນຂັ້ນຕໍ່ໄປ.

*3.4 ວິທີການວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້ໃນການຄົ້ນຄ້ວາ*

ການວິເຄາະຂໍ້ມູນໃນການສຶກສາຄ້ວາຄັ້ງນີ້ແມ່ນນໍາໃຊ້ໂປຣແກຣມຄອມພິວເຕີສໍາເລັດຮູບ SPSS version 20 ເຂົ້າຊ່ວຍໃນການວິເຄາະຂໍ້ມູນ ໂດຍໃຊ້ຄ່າສະຖິຕິພື້ນຖານໄດ້ແກ່ ຄ່າສະເລ່ຍ (Mean), ຄ່າຜັນປ່ຽນມາດຕະຖານ (Standard Deviation), ການທົດສອບຜົນຄະແນນກ່ອນ ແລະ ຫຼັງການຮຽນ (Independent Sample T-test) ແລະ ຄ່າດັດສະນີປະສິດທິຜົນ E.I (ປະເຊີນ ກິດລະການ ແລະ ສົມນຶກ ພັດທິຍະນີ, 2545, ໜ້າ 31-35)

## 4. ຜົນການຄົ້ນຄ້ວາ

ການນໍາໃຊ້ຮູບແບບການສອນ PBL ເຂົ້າໃນການພັດທະນາການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນສໍາລັບນັກສຶກສາຄູປະຖົມ ລະບົບ 12+2 ປີທີ 1 ຢູ່ທີ່ວິທະຍາໄລຄູປາກເຊ ໃນຄັ້ງນີ້ມີຜົນໄດ້ຮັບດັ່ງນີ້:

1.1 *ຂໍ້ມູນສ່ວນຕົວຂອງກຸ່ມຕົວຢ່າງ*

ການວິໄຈຄັ້ງນີ້ເກບຂໍ້ມູນກຸ່ມຕົວຢ່າງຈໍານວນ 32 ຄົນ ຍິງ 20 ຄົນເຊິ່ງສະແດງອອກດັ່ງລຸ່ມນີ້:

ຕອນທີ1: ຜົນການສຶກສາຜົນສໍາເລັດທາງການຮຽນ ກ່ອນ ແລະ ຫຼັງ ການຈັດຮູບແບບການສອນ PBL

ຕາຕະລາງ 3: ສະແດງຜົນປຽບທຽບຄະແນນສອບກ່ອນ ແລະ ຫຼັງການຮຽນ

| ຄະແນນທົດສອບ | ຈໍານວນນັກຮຽນ | $\overline{X}$ | SD | t-test | sig |
|---|---|---|---|---|---|
| ຫຼັງຮຽນ | 32 | 23.44 | 1.31 | 19.31 | 0.00 |
| ກ່ອນຮຽນ | 32 | 17.53 | 2.18 | | |
| ລວມ | 32 | 5.90 | 1.72 | | |

ຈາກຕາຕະລາງ 3 ພົບວ່າ: ຜົນການຮຽນຮູ້ຂອງນັກສຶກສາກ່ອນ ແລະ ຫຼັງການຮຽນໂດຍນໍາໃຊ້ວິທີສອນແບບ PBL ເຂົ້າໃນການຈັດການຮຽນການສອນກ່ຽວກັບການພັດທະນາທັກສະການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນສໍາລັບນັກສຶກສາຄູລະບົບ 12+2 ປີທີ 1 ວິທະຍາໄລຄູປາກເຊ ຄະແນນຫຼັງການຮຽນ ($\overline{X}$ = 23.44, SD = 1.31) ສູງກວ່າກ່ອນການຮຽນ ($\overline{X}$ = 17.53, SD = 2.18) ດ້ວຍລໍາດັບຄວາມສໍາຄັນທາງສະຖິຕິ ($t(32) = 19.31, p < 0.05$) .

ຜົນການວິເຄາະຫາປະສິດທິຜົນການຮຽນຮູ້ (E.I)

ຕາຕະລາງ 4: ສະແດງປະສິດທິຜົນການຮຽນຮູ້ຂອງນັກສຶກສາ

| ຄະແນນລວມ | | | | |
|---|---|---|---|---|
| ຈຳນວນນັກສຶກສາທັງໝົດ | ຄະແນນເຕັມ | ຄະແນນທົດສອບກ່ອນຮຽນ | ຄະແນນທົດສອບຫຼັງຮຽນ | ປະສິດທິຜົນ (E.I) |
| 32 | 30 | 561 | 750 | 0.557 |

ຈາກຕາຕະລາງ 4: ຜົນການວິເຄາະປະສິດທິຜົນຄວາມກ້າວໜ້າທາງດ້ານພັດທະນາການຮຽນຮູ້ຂອງນັກສຶກສາ (E.I) ໂດຍການນຳໃຊ້ວິທີສອນແບບ (PBL) ເຂົ້າໃນການຈັດການຮຽນການສອນວິຊາພາສາອັງກິດກ່ຽວກັບທັກສະການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນສຳລັບນັກສຶກສາຄູປະຖົມລະບົບ 12+2ປີທີ 1 ວິທະຍາໄລຄູປາກເຊ ມີຄ່າເທົ່າກັບ 0.557 ສແດງວ່ານັກສຶກສາມີຄວາມຮູ້ເພີ່ມຂຶ້ນ 0.557 ຫຼື ຄິດໄລ່ເປັນສ່ວນຮ້ອຍເທົ່າກັບ 55.75 %

ຕອນທີ 2: ຜົນການສຶກສາຄວາມເພິ່ງພໍໃຈຂອງນັກສຶກສາຄູປະຖົມຕໍ່ການຈັດການຮຽນການສອນໂດຍໃຊ້ຮູບແບບ ການສອນ PBL

ຕາຕະລາງ 5: ສະແດງຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບການນຳໃຊ້ຮູບແບບການສອນ PBL

| ເນື້ອໃນການປະເມີນ | $\overline{X}$ | S.D | ລຳດັບຂອງຄວາມເພິ່ງພໍໃຈ |
|---|---|---|---|
| ດ້ານເນື້ອໃນບົດຮຽນ | 4,24 | 0.71 | ມີຄວາມເພິ່ງພໍໃຈຫຼາຍ |
| ດ້ານກິດຈະກຳການຮຽນການສອນ | 4.22 | 0.71 | ມີຄວາມເພິ່ງພໍໃຈຫຼາຍ |
| ດ້ານການວັດ ແລະ ປະເມີນຜົນ | 4.31 | 0.67 | ມີຄວາມເພິ່ງພໍໃຈຫຼາຍ |
| ດ້ານບັນຍາກາດການຮຽນ | 4.34 | 0.67 | ມີຄວາມເພິ່ງພໍໃຈຫຼາຍ |
| ປະໂຫຍດທີ່ຈະໄດ້ຮັບ | 4.42 | 0.69 | ມີຄວາມເພິ່ງພໍໃຈຫຼາຍ |
| | 4.31 | 0.69 | ມີຄວາມເພິ່ງພໍໃຈຫຼາຍ |

ຈາກຕາຕະລາງ 5: ພົບວ່າການນຳໃຊ້ວິທີສອນແບບ (PBL) ເຂົ້າໃນການຈັດການຮຽນການສອນວິຊາພາສາອັງກິດເລື່ອງທັກສະການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນສຳລັບນັກສຶກສາຄູປະຖົມ ລະບົບ 12+2 ປີທີ 1 ວິທະຍາໄລຄູປາກເຊ. ນັກສຶກສາຄູມີຄວາມເພິ່ງພໍໃຈໂດຍລວມ $\overline{X}$= 4.31, S.D = 0.69 ຖ້າທຽບໃສ່ເກນທີ່ຕັ້ງໄວ້ແມ່ນມີຄວາມເພິ່ງພໍໃຈຫຼາຍ, ຖ້າເບິ່ງເປັນຫຼາຍດ້ານເຫັນວ່າ: ດ້ານທີ່ມີຄ່າສະເລ່ຍຫຼາຍກ່ວາໝູ່ໄດ້ແກ່ດ້ານປະໂຫຍດທີ່ຈະໄດ້ຮັບ $\overline{X}$ = 4.42, S.D = 0.69 ແລະດ້ານທີ່ມີຄະແນນຫຼຸດລົງມາໄດ້ແກ່ດ້ານບັນຍາກາດໃນການຮຽນ $\overline{X}$= 4.34, S.D = 0.67.

## 5. ອະພິປາຍຜົນ

ຈາກການສຶກສາຄົ້ນຄ້ວາການນຳໃຊ້ວິທີການສອນແບບ PBL ເຂົ້າໃນການຈັດການຮຽນການສອນ ວິຊາພາສາອັງກິດທັກສະການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍາກອນສຳລັບນັກສຶກສາຄູປະຖົມ ລະບົບ 12+2 ປີທີ1 ວິທະຍາໄລຄູປາກເຊສົກຮຽນ 2021-2022 ຜູ້ຄົ້ນຄ້ວານຳເອົາຈຸດສຳຄັນມາອະພິປາຍຜົນດັ່ງລຸ່ມນີ້:

*5.1 ປະສິດທິຜົນທາງດ້ານການພັດທະນາການຮຽນຮູ້ຂອງນັກສຶກສາ (E.I)*

ການນາໃຊ້ວິທີສອນແບບ PBL ເຂົ້າໃນການຈັດການຮຽນ-ການສອນວິຊາພາສາອັງກິດກ່ຽວກັບທັກສະ ການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍາກອນສຳລັບນັກສຶກສາຄູປະຖົມ ລະບົບ 12+2 ປີ 1 ວິທະຍາ ໄລຄູປາກເຊ ສົກຮຽນ 2021-2022 ມີຄ່າເທົ່າກັບ 0.5575 ສະແດງວ່າ: ນັກສຶກສາມີຄວາມຮູ້ເພີ່ມຂຶ້ນ 0.5575 ຫຼື ຄິດໄລ່ເປັນສ່ວນຮ້ອຍເທົ່າກັບ 55.75%. ເຊິ່ງເປັນຜົນເນື່ອງຈາກຜູ້ສຶກສາຄົ້ນຄວ້າໄດ້ຮອບຮອມຂໍ້ ມູນໂດຍເຮັດການທົດສອບກ່ອນການຮຽນ ແລະ ຫຼັງການຮຽນດ້ວຍການຈັດກິດຈະກຳການຮຽນ-ການສອນ ແບບ PBL ແລ້ວນຳມາວິເຄາະຫາຄ່າດັດຊະນີ ປະສິດທິຜົນຂອງແຜນການຈັດກິດຈະກຳການຮຽນ-ການສອນວິຊາພາສາອັງກິດກ່ຽວກັບທັກສະການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນສຳລັບນັກສຶກສາຄູປະຖົມລະບົບ 12+2 ປີທີ 1 ວິທະຍາໄລຄູປາກເຊສົກຮຽນ 2021-2022 ຕາມແບບ PBL ສະແດງວ່ານັກສຶກສາມີຄວາມກ້າວໜ້າຄິດເປັນເປີເຊັນເທົ່າກັບ 55.75. ເຊິ່ງສອດຄ່ອງກັບການສຶກສາຂອງ (Hmelo-Silver, 2004) ໂດຍໃຫ້ຜູ້ຮຽນສ້າງຄວາມຮູ້ໃໝ່ ຈາກການໃຊ້ບັນຫາທີ່ເກີດຂຶ້ນຈິງໃນໂລກເປັນສະພາບການຂອງການຮຽນຮູ້ (Learning context) ເພື່ອໃຫ້ຜູ້ຮຽນເກີດທັກສະໃນການວິເຄາະ ແລະ ຄິດແກ້ໄຂບັນຫາ ລວມທັງໄດ້ຄວາມຮູ້ຕາມສາຂາວິຊາທີ່ຕົນສຶກສາໄປພ້ອມໆກັນ ການຮຽນຮູ້ໂດຍໃຊ້ບັນຫາ ເປັນຖານຈຶ່ງເປັນຜົນມາຈາກຂະບວນການເຮັດວຽກທີ່ຕ້ອງອາໃສຄວາມເຂົ້າໃຈ ແລະ ການແກ້ໄຂບັນຫາເປັນຫຼັກ , ທາງນີ້ແມ່ນເນື່ອງມາຈາກຜູ້ຄົ້ນຄວ້າໄດ້ພິຈາລະນາອອກແບບກິດຈະກຳການຮຽນການສອນທີ່ສະໜັບສະໜູນໃຫ້ຜູ້ຮຽນໄດ້ຮຽນຮູ້ຜ່ານກຸ່ມຮ່ວມມື ໂດຍການຈັດໃຫ້ນັກສຶກສາເຮັດວຽກຮ່ວມກັນເປັນກຸ່ມຍ່ອຍທີ່ຄຳນຶງເຖິງຄວາມສາມາດຂອງນັກສຶກສາ ໂດຍມີຄູເປັນຜູ້ແນະນຳກິດຈະກຳໃນບົດຮຽນລວມທັງການສົ່ງເສີມບັນຍາກາດໃນການຮຽນໃຫ້ເກີດການຮ່ວມມືກັນດ້ວຍການຈັດໃຫ້ຜູ້ຮຽນໃຊ້ຄວາມສຳພັນຢ່າງຕໍ່ເນື່ອງກັນທັງໃນດ້ານການແລກປ່ຽນຄວາມຮູ້, ຄວາມຄິດເຫັນ, ການຊ່ວຍເຫຼືອເຊິ່ງກັນແລະ ກັນ ແລະ ຄວາມຮັບຜິດຊອບໜ້າວຽກຂອງຕົນເອງຄຽງຄູ່

ກັບຄວາມຮັບຜິດຊອບການເຮັດວຽກໃນກຸ່ມອີກດ້ວຍປະກອບກັບການຈັດກິດຈະກຳການຮຽນແບບດັ່ງກ່າວແມ່ນສະໜັບສະໜູນໃຫ້ຜູ້ຮຽນສ້າງຄວາມຮູ້ດ້ວຍຕົນເອງ, ສ້າງໃຫ້ຜູ້ຮຽນມີຄວາມເຂົ້າໃຈ, ສາມາດຕີຄວາມໝາຍ, ຄິດວິເຄາະ, ສັງເຄາະຂໍ້ມູນ, ສະຫຼຸບຄວາມຮູ້ ແລະ ໃຊ້ການປະຕິສຳພັນກັບໝູ່ເພື່ອນເພື່ອສົ່ງເສີມຊຸກຍູ້ການພັດທະນາການຮ່ວມມືທີ່ມີຄຸນນະພາບສູງ ແລະ ຍືນຍົງ ເຊິ່ງສອດຄ່ອງກັບງານວິໄຈ (Kok and Duman, 2023)( Collaborative learning in PBL) ຄຸນນະພາບການຮ່ວມມືໃນການຮຽນຮູ້ຕາມຮູບແບບ PBL, ຜົນການຮຽນຮູ້ຂອງນັກສຶກສາກ່ອນ ແລະ ຫຼັງການຮຽນໂດຍນຳໃຊ້ວິທີສອນແບບ PBL ເຂົ້າໃນການຈັດການຮຽນການສອນກ່ຽວກັບການພັດທະນາທັກສະການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນສຳລັບນັກສຶກສາຄູລະບົບ 12+2 ປີທີ 1 ວິທະຍາໄລຄູປາກເຊ ຄະແນນຫຼັງການຮຽນ ( $\overline{X}$= 23.44, SD = 1.31) ສູງກວ່າກ່ອນການຮຽນ ( $\overline{X}$= 17.53, SD = 2.18) ດ້ວຍລຳດັບຄວາມສຳຄັນທາງສະຖິຕິ ($t(32) = 19.31, p < 0.05$) ສະແດງວ່າການສອນໃນຮູບແບບ PBL ແມ່ນການພັດທະນາການຄິດວິພາກ ໂດຍໄດ້ເນັ້ນໜັກໃຫ້ຜູ້ຮຽນເປັນໃຈກາງ ແລະ ໃຊ້ບັນຫາເປັນຕົວກະຕຸ້ນໃຫ້ເກີດການຮຽນຮູ້, ຜູ້ຮຽນຈະຕ້ອງເຮັດຄວາມເຂົ້າໃຈບັນຫາ, ຄົ້ນຄວ້າຫາຂໍ້ມູນ, ວິເຄາະ ແລະ ນຳສະເໜີແນວທາງການແກ້ໄຂບັນຫາດ້ວຍຕົນເອງ ເຊິ່ງ PBL ບໍ່ໄດ້ຈຳກັດພຽງແຕ່ການຮຽນຮູ້ໃນຫ້ອງຮຽນເທົ່ານັ້ນແຕ່ຍັງສາມາດນຳມາປະຍຸກໃຊ້ກັບສະຖານະການຈິງໃນຊີວິດປະຈຳວັນ.

*5.2 ຄວາມເພິ່ງພໍໃຈທີ່ມີຕໍ່ການຈັດການຮຽນ-ການສອນແບບໃຊ້ບັນຫາເປັນຖານ PBL*

ດ້ານການຮຽນການສອນ ແບບ PBL ເຫັນວ່ານັກສຶກສາຮຽນວິຊາພາສາອັງກິດເລື່ອງທັກສະການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນໂດຍຄວາມເພິ່ງພໍໃຈເປັນລາຍຂໍ້ມີຄວາມພໍໃຈຫຼາຍ, ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການຈັດການຮຽນການສອນແບບ PBL ໄດ້ແບ່ງອອກເປັນ 6 ດ້ານຄື: ດ້ານເນື້ອໃນບົດຮຽນ, ດ້ານການຈັດການຮຽນການສອນ, ດ້ານການນຳໃຊ້ສື່ການສອນ, ດ້ານການວັດ ແລະ ປະເມີນຜົນ, ດ້ານບັນຍາກາດການຮຽນ ແລະ ດ້ານປະໂຫຍດທີ່ໄດ້ຮັບ ໂດຍພາບລວມໃນ 6 ດ້ານ ນັກສຶກສາມີຄວາມເພິ່ງພໍໃຈໃນລະດັບຫຼາຍ ມີຄ່າສະເລ່ຍ $\overline{X}$ = 4.31, S.D = 0.69. ເນື່ອງຈາກການນຳໃຊ້ວິທີການສອນແບບ PBL ເປັນຮູບແບບການສອນທີ່ເຮັດໃຫ້ນັກສຶກສາສາມາດປະຕິບັດກິດຈະກຳການຮຽນຮູ້ຢ່າງເບີກບານມ່ວນຊື່ນ ແລະ ປະສົບຜົນສຳເລັດ, ການຮຽນຮູ້ດ້ວຍການຄົ້ນພົບບັນຫາ ແລະ ສາມາດແກ້ໄຂບັນຫາທີ່ເກີດຂຶ້ນຜ່ານມາດ້ວຍຕົນເອງ, ການສ້າງຄວາມຮູ້ຂຶ້ນເອງ, ຄົ້ນພົບສິ່ງທີ່ຮຽນຮູ້ດ້ວຍຕົນເອງ, ສາມາດຈື່ຈຳບົດຮຽນໄດ້ດີ, ເຮັດໃຫ້ນັກສຶກສາມີຄວາມພູມໃຈໃນຜົນງານຂອງຕົນເອງ ແລະ ເຮັດໃຫ້ຜູ້ຮຽນຢາກຮຽນຮູ້ຫຼາຍຂຶ້ນເຊິ່ງສອດຄ່ອງກັບ ກຽງສັກ ພອຍແສງ (2010,121) ການສຶກສາຜົນສຳເລັດທາງການຮຽນວິຊາພາສາການສື່ສານທີ່ຈັດການຮຽນຮູ້ແບບໃຊ້ບັນຫາເປັນຖານຂອງນັກສຶກສາປີທີ 1 ມະຫາວິທະຍາໄລຈຸລາລົງກອນ ໂດຍພາບລວມນັກສຶກສາມີຄວາມເພິ່ງພໍໃຈຫຼາຍ.

## 6. ສະຫຼຸບຜົນ

ຜົນໄດ້ຮັບຈາກການຄົ້ນຄ້ວຄັ້ງນີ້ສາມາດສະຫຼຸບໄດ້ວ່າປະສິດທິຜົນຄວາມກ້າວໜ້າທາງດ້ານການພັດທະນາການຮຽນຮູ້ຂອງນັກສຶກສາ (E.I) ການນຳໃຊ້ການສອນແບບPBL ເຂົ້າໃນການຈັດການຮຽນການສອນທັກສະການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນສຳລັບນັກສຶກສາຄູລະບົບ 12+2 ປີທີ 1 ວິທະຍາໄລຄູປາກເຊ ເທົ່າກັບ 0.5575 ສະແດງວ່າ: ນັກຮຽນມີຄວາມຮູ້ເພີ່ມຂຶ້ນ 0.5575 ຫຼື ຄິດໄລ່ເປັນເປີເຊັນ 55.75 % . ຜົນຄະແນນຫຼັງການຮຽນ ( = 23.44, SD = 1.31) ສູງກວ່າກ່ອນການຮຽນ ( = 17.53, SD = 2.18) ດ້ວຍລຳດັບຄວາມສຳຄັນທາງສະຖິຕິ ($t(32) = 19.31, p < 0.05$). ການນຳໃຊ້ການສອນແບບ PBL ເຂົ້າໃນການຈັດການຮຽນການສອນວິຊາພາສາອັງກິດກ່ຽວກັບທັກສະການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນສຳລັບນັກສຶກສາຄູລະບົບ 12+2 ປີທີ 1 ວິທະຍາໄລຄູປາກເຊ ສົກຮຽນ 2021-2022 ນັກສຶກສາມີຄວາມເພິ່ງພໍໃຈ $\overline{X}$ = 4.31, S.D = 0.69 ມີຄວາມເພິ່ງພໍໃຈໃນລະດັບຫຼາຍ. ດັ່ງນັ້ນ, ການນຳໃຊ້ຮູບແບບການສອນ PBL ເຂົ້າໃນການພັດທະນາການຂຽນພາສາອັງກິດໃຫ້ຖືກຕ້ອງຕາມຫຼັກໄວຍະກອນແມ່ນ ຊ່ວຍໃຫ້ນັກສຶກສາເກີດການຮຽນຮູ້ຜ່ານການຮ່ວມມືໃນກຸ່ມ, ຮູ້ການແກ້ໄຂບັນຫາ ແລະ ເພີ່ມປະສິດທິຜົນຄວາມກ້າວໜ້າທາງດ້ານການຮຽນຫຼາຍກວ່າການຮຽນປົກກະຕິ ເຊິ່ງສາມາດນຳເອົາຮູບແບບການສອນນີ້ໄປໃຊ້ໃນການຈັດກິດຈະກຳການຮຽນການສອນໃນສາຂາວິຊາອື່ນໆອີກ ແລະ ຄວນນຳໃຊ້ PBL ໃນຫຼັກສູດຝຶກອົບຮົມຄູພາສາອັງກິດທົ່ວປະເທດລາວ

## 7. ຂໍ້ສະເໜີແນະ

ຂໍ້ສະເໜີແນະທີ່ເປັນປະໂຫຍດຕໍ່ການປັບປຸງ ແລະ ພັດທະນາການສອນພາສາອັງກິດຂອງຕົນໃຫ້ດີຍິ່ງຂຶ້ນຜູ້ສຶກສາຄົ້ນຄ້ວາຂໍສະເໜີແນະດ້ານຕ່າງໆດັ່ງນີ້:

1) ຄວນມີການສຶກສາປຽບທຽບຜົນການຮຽນຮູ້ຂອງຜູ້ຮຽນເປັນກຸ່ມ: ກຸ່ມເກັ່ງ: ກຸ່ມປານກາງ ແລະ ກຸ່ມອ່ອນ ດ້ວຍການຈັດກິດຈະກຳການສອນແບບໃຊ້ບັນຫາເປັນຖານ (PBL) ເພື່ອສຶກສາຄວາມກ້າວໜ້າຂອງຜູ້ຮຽນ.

2) ສະເໜີໃຫ້ຄູສອນພາສາອັງກິດນຳເອົາຮູບແບບການສອນ PBL ໄປທົດລອງໃຊ້ໃນການພັດທະນາທັກສະອື່ນໆໃນວິຊາພາສາອັງກິດເຊັ່ນ ທັກສະການອ່ານ, ການຟັງ ແລະ ທຽບເທົ່າຜົນໄດ້ຮັບກັບກຸ່ມຄວບຄຸມ

3) ການສຶກສາຄົ້ນຄວ້າຄັ້ງນີ້ແມ່ນຢູ່ໃນຂອບເຂດຂອງວິທະຍາໄລຄູປາກເຊ ສະນັ້ນຈຶ່ງຢາກຂະຫຍາຍຂະໜາດຂອງການຄົ້ນຄວ້າໄປສູ່ຫຼາຍວິທະຍາໄລໃນທົ່ວປະເທດ.

## 8. ຂໍ້ຈຳກັດໃນການຄົ້ນຄ້ວາ

ໃນການສຶກສາຄັ້ງນີ້ມີຂໍ້ຈຳກັດດັ່ງນີ້: ແຫຼ່ງຂໍ້ມູນທີ່ມານຳໃຊ້ໃນການຂຽນບົດຍັງມີຈຳກັດ. ນັກສຶກສາຍັງບໍ່ລຶ້ງເຄີຍກັບວິທີຈັດການຮຽນ-ການສອນໃນແບບດັ່ງກ່າວ. ໄລຍະເວລາການຂຽນ ແລະ ປະກອບຂໍ້ມູນໃສ່ບົດແມ່ນໜ້ອຍ.

## 9. ເອກະສານອ້າງອີງ


ກຽງສັກພອຍແສງ. (2010). *ສຶກສາຜົນສໍາເລັດການຮຽນລາຍວິຊາພາສາກັບການສື່ສານທີ່ຈັດການຮຽນຮູ້ແບບໃຊ້ບັນຫາເປັນຖານ.* ກຸງເທບມະຫານະຄອນ.

ສົມນຶກ ພັດທິຍະທານີ. (2546). ການວັດຜົນການສຶກສາ. (ພິມຄັ້ງທີ 7) ກາລະສິນ: ປະສານການພິມ.

ຊັດທະວະດີ ບຸນຖະໜອມ. (2004). *ການຈັດການຮຽນຮູ້ໂດຍໃຊ້ບັນຫາເປັນຖານ.* ກຸງເທບມະຫານະຄອນ: ມະຫາວິທະຍາໄລ ສວນດຸສິດ.

ທະນັນຍາ ກຸນເຈລາ ແລະ ນິດທິດາ ອາຕິພັດທະຣະນັນ. (2018). *Using Project Based Learning to Enhance English Reading, Writing, and Thinking Skills Among Grade 11 students.* ພາກວິຊາຫຼັກສູດ, ການສອນ ແລະ ເທັກໂນໂລຍີການຮຽນຮູ້ (ການສອນພາສາອັງກິດ): ຄະນະສຶກສາສາດ ມະຫາວິທະຍາໄລຊຽງໃໝ່.

ທິບວະໄລ ໂກວິດ. (2540). *ການຈັດການຮຽນການສອນພາສາອັງກິດໃນສັດຕາວັດທີ 21.* Retrieved from https://so04.tci-thaijo.org.

ບຸນຊົມ ສີສະອາດ. (2554). ການວິໄຈເບື້ອງຕົ້ນ. ກຸງເທບ: ສຸວີຣິຍາສານ ຈໍາກັດ.

ປະເຊີນ ກິດລະການ ແລະ ສົມນຶກ ພັດທິຍະນີ. (2545 :31-35). *ການວັດຜົນການສຶກສາ.* ມະຫາສາລະຄາມ: ມະຫາວິທະຍາໄລມະຫາສາລະຄາມ.

ມະຫາວິທະຍາໄລຊຽງໃໝ່. (2010). ຄວາມສໍາຄັນຂອງພາສາອັງກິດຕໍ່ການພັດທະນາ. *ວະລະສານການສຶກສາ*, 1.

Yiying ZHANG. (2015). Problem Based Learning in Chinese College English Listening and Speaking Course: From Theory to Practice. *Canadian Socail Science.*

Barrows. (1996). *ທິດສະດີພື້ນຖານ PBL.*

Bloom's Taxonomy. (1956). *he outlined six main categories: knowledge, comprehension, application, analysis, synthesis and evaluation.* University of Florida.

Dochy, F., Segers, M., Van den Bossche, P., & Gijbels, D. (2003). Effects of problem-based learning: A meta-analysis. *Learning and instruction*, *13*(5), 533-568.

Kök, F. Z., & Duman, B. (2023). The effect of problem-based learning on problem-solving skills in English language teaching. *Journal of Pedagogical Research*, *7*(1), 154-173.

Hmelo-Silver. (2004). *Problem-Based-Learning.*

Kirschner et al. (2006). *Educational phychologist.*

Zhang, R., Shi, J., & Zhang J. (2023). Research on the quality of Collaboration in Project-Based Learning on group Awareness. *MDPI*